ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ມີນາ 2024
ປີທີ 13
ສະບັບທີ 961
ລາຍສັປະດາ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກຸມພາ 2024



(ສພຊ) ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກຸມພາ 2024 ໄດ້ດຳເນີນໃນລະຫວ່າງວັນທີ 28-29 ກຸມພາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ຜູ້ຮັກສາການແທນປະທານຄະນະປະຈຳ

ອ່ານຕໍ່ໜ້າ 2

## ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ຕ້ອນຮັບ ຫົວໜ້າຫ້ອງວ່າການສະພາແຫ່ງຊາດຫວຽດນາມ

(ສພຊ) ຕອນແລງຂອງວັນທີ 05 ມີນາ 2024 ທີ່ຫ້ອງວ່າການປົກຄອງແຂວງອຸດົມໄຊ, ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະ ຫາຍ ບຸ່ຍ ວັນ ເກື່ອງ (Bùi Văn Cường) ກຳມະການສູນກາງພັກກອມມູນິດຫວຽດນາມ, ເລຂາທິການ, ຫົວ

ອ່ານຕໍ່ໜ້າ 4



## ຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ພົບປະແລກປ່ຽນບົດຮຽນ



(ສພຊ) ກອງປະຊຸມສຳມະນາແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ໄດ້ຈັດຂຶ້ນຢູ່ແຂວງອຸດົມໄຊ ໃນຕອນເຊົ້າຂອງວັນທີ 06 ມີນາ 2024 ໂດຍການເປັນປະທານຮ່ວມຂອງສະຫາຍ ນາງ ປັ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ແລະ ສະຫາຍ ບຸ່ຍ ວັນ ເກື່ອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ເລຂາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດຫວຽດນາມໂດຍມີສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະຫາຍເລຂາພັກແຂວງ, ເຈົ້າແຂວງອຸດົມໄຊ, ບັນດາສະຫາຍຮອງເລຂາທິການ/ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດລາວ-ຫວຽດນາມ, ເລຂາ-ຮອງເລຂາທິການສະພາປະຊາຊົນຂັ້ນແຂວງໃນເຂດເລືອກຕັ້ງທົ່ວປະເທດ, ຫົວໜ້າ-ຮອງຫົວໜ້າກົມ

ອ່ານຕໍ່ໜ້າ 4

## ຮອງປະທານສະພາແຫ່ງຊາດພົບປະໂອ້ລົມພະນັກງານສະພາປະຊາຊົນແຂວງສາລະວັນ



(ສພຊ) ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ພົບປະຢ້ຽມຢາມ ແລະ ໂອ້ລົມພະນັກງານຫຼັກແຫຼ່ງພາຍໃນສະພາປະຊາຊົນແຂວງ (ສພຂ) ສາລະວັນ ໃນຕອນບ່າຍຂອງວັນທີ 26 ກຸມພາ 2024. ທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານດີເດັ່ນຮອບດ້ານໃນການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງຕະຫຼອດໄລຍະທີ່ຜ່ານ

ອ່ານຕໍ່ໜ້າ 2

## ຍົກສູງບົດບາດການຕິດຕາມກວດກາວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ




(ສພຊ) ເພື່ອຍົກລະດັບຄວາມຮັບຮູ້, ຄວາມເຂົ້າໃຈເປັນເອກະພາບກັນຕໍ່ບັນດານິຕິກຳທີ່ກ່ຽວຂ້ອງກັບວຽກງານພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ; ເພື່ອຍົກສູງພາລະບົດບາດໃນການຕິດຕາມກວດກາແຕ່ຫົວທີ່ຕໍ່ຊົງເຂດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃຫ້ແກ່ສະມາຊິກສະພາແຫ່ງຊາດ ທີ່ເປັນກຳມະການຂອງກຳມາທິການບັນດາເຜົ່າ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທີ່ເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ວິຊາການທີ່ກ່ຽວຂ້ອງ; ເພື່ອປະກອບສ່ວນຢ່າງຕັ້ງໜ້າຊຸກຍູ້ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃຫ້ບັນລຸຕາມຄາດໝາຍຂອງມະຕິທີ່ສະພາແຫ່ງຊາດຮັບຮອງ. ລະຫວ່າງວັນທີ 04-05 ມີນາ 2024 ກຳມາທິການບັນດາເຜົ່າ (ກບຜ) ໄດ້ຈັດກອງປະ

ອ່ານຕໍ່ໜ້າ 3

## ຄະນະຜູ້ແທນສະພາແຫ່ງຊາດ ຫວຽດນາມ-ລາວ ວາງພວງມາລາຢູ່ອານຸສາວະລີນ້ຳໃຈສາມັກຄີສູ້ຮົບລາວ-ຫວຽດນາມ



(ສພຊ) ຕອນເຊົ້າວັນທີ 06 ມີນາ 2024 ທີ່ແຂວງອຸດົມໄຊ, ສະຫາຍ ບຸ່ຍ ວັນ ເກື່ອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແລະ ສະຫາຍ ສີງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດລາວ ພ້ອມດ້ວຍຄະນະ ໄດ້ເຂົ້າວາງ

ອ່ານຕໍ່ໜ້າ 3


ບັນຫາທີ່ພົ້ນເດັ່ນ... (ໜ້າ 6)


ສະພາແຫ່ງຊາດ... (ໜ້າ 9)


3 ສະໝຸນໄພ... (ໜ້າ 10)



ບັນຫາການຕົ້ມຕຸ໋ນ... (ໜ້າ 11)

# ຮອງປະທານສະພາແຫ່ງຊາດ ຕ້ອນຮັບ ເລຂາທິການສະພາແຫ່ງຊາດ ສ.ເກົາຫຼີ



(ສພຊ) ໃນວັນທີ 1 ມີນາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບທ່ານ ແບກ ແຈ ຢອນ (BAEK Jae Hyun) ເລຂາທິການສະພາແຫ່ງຊາດ ສ.ເກົາຫຼີ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ.

ໃນໂອກາດດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການພົບປະໃນຄັ້ງນີ້ ເຊິ່ງເປັນໂອກາດດີທີ່ຈະໄດ້ປຶກສາຫາລື ແລະ ຊຸກຍູ້ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງສອງປະເທດ ລາວ - ສ.ເກົາຫຼີ ກໍຄືສອງອົງການນິຕິບັນຍັດ ທີ່ມີມູນເຊື້ອດີງາມມາແຕ່ດົນນານນັບຕັ້ງແຕ່ ສປປລາວ ແລະ ສ.ເກົາຫຼີ ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນໃນວັນທີ 25ຕຸລາ1995 ໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ; ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ - ສ.ເກົາຫຼີ ໄດ້ຮັບການເສີມຂະຫຍາຍດີຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄລຍະຜ່ານມາ ໄດ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ, ຂັ້ນກຳມາທິການ, ຄະນະມິດຕະພາບລັດຖະສະພາ ແລະ ວິຊາການ ລວມທັງມີການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ, ສະໜັບສະໜູນເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນຢ່າງເປັນປົກກະຕິ. ພ້ອມດຽວກັນນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ຖືໂອກາດນີ້ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນ ສ.ເກົາຫຼີ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປລາວ ເປັນຕົ້ນການຊ່ວຍເຫຼືອເພື່ອການພັດທະນາຊົນນະບົດ, ການພັດທະນາດ້ານສາທາລະນະສຸກ, ການສຶກສາ, ທ່ອງທ່ຽວ, ກິລາ ເຊິ່ງເປັນການປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປລາວ ໃຫ້ຂະຫຍາຍຕົວໄປເປັນກ້າວໆ.

ທ່ານເລຂາທິການສະພາແຫ່ງຊາດ ສ.ເກົາຫຼີ ໄດ້ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ໃຫ້ຄຳໝັ້ນວ່າຈະສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ກໍຄືສອງອົງການນິຕິບັນຍັດ ທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການເສີມຂະຫຍາຍແລະເປັນຮູບປະທຳຍິ່ງໆຂຶ້ນໄປ ລວມທັງຈະສືບຕໍ່ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະ ຂໍ້ຕົກລົງຕ່າງໆທີ່ໄດ້ລົງນາມຮ່ວມກັນ ໂດຍສະເພາະຂະແໜງການທີ່ສອງປະເທດມີທ່າແຮງ ເຊັ່ນ: ການພັດທະນາຊົນນະບົດ, ການສຶກສາ, ການບໍລິການ ແລະ ສາທາລະນະສຸກ ໃຫ້ໄດ້ຮັບປະສິດທິຜົນສູງເປັນກ້າວໆ.

# ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ມອບເຄື່ອງໃຫ້ໂຮງຮຽນສາມັນກິນນອນຊົນເຜົ່າ

(ສພຊ)ໃນໂອກາດທີ່ມາເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມຄັ້ງທີXII ເຊິ່ງຈັດຂຶ້ນຢູ່ແຂວງອຸດົມໄຊ;ວັນພະຫັດທີ 07 ມີນາຜ່ານມາ, ສະຫາຍ ຫວູ ມິ່ງ ຕ໋ວນ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດຫວຽດນາມ ພ້ອມດ້ວຍຄະນະ ໄດ້ໄປຢ້ຽມຢາມ ແລະ ນຳເອົາຄອມພິວເຕີຕັ້ງໂຕະຈຳນວນ05 ຊຸດ ແລະ ອຸປະກອນການຮຽນຈຳນວນໜຶ່ງ ມາມອບໃຫ້ແກ່ໂຮງຮຽນສາມັນກິນນອນຊົນເຜົ່າແຂວງອຸດົມໄຊ ເພື່ອເປັນການສົ່ງເສີມການສຶກສາ ເວົ້າລວມ, ເວົ້າສະເພາະແມ່ນການຮຽນ-ການສອນຂອງຄູອາຈານ ແລະ ນ້ອງນັກຮຽນຢູ່ໂຮງຮຽນດັ່ງກ່າວ ໃຫ້ນັບມື້ດີຂຶ້ນ.

ກ່າວມອບໂດຍສະຫາຍ ຫວູ ມິ່ງ ຕ໋ວນ ແລະ ກ່າວຮັບໂດຍສະຫາຍ ສົມຈັນ ພົນທະສິດ ຜູ້ອຳນວຍການໂຮງຮຽນສາມັນກິນນອນຊົນເຜົ່າແຂວງອຸດົມໄຊ; ມີສະຫາຍ ນາງ ປິ່ງຄຳ ລາຊະສົມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນກອງປະຊຸມສຳມະນາຄັ້ງນີ້, ຄູອາຈານ ແລະ ນ້ອງນັກຮຽນເຂົ້າຮ່ວມ.

ໂອກາດດັ່ງກ່າວ, ສະຫາຍ ສົມຈັນ ພົນທະສິດ ໄດ້ສະແດງຄວາມຂອບໃຈຕໍ່ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ທີ່ໄດ້ນຳເອົາເຄື່ອງມາຊ່ວຍເຫຼືອ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການຮຽນ-ການສອນ ພ້ອມທັງຈະນຳໃຊ້ເຄື່ອງດັ່ງກ່າວໝູນໃຊ້ເຂົ້າໃນວຽກງານຂອງໂຮງຮຽນໃຫ້ໄດ້ຮັບການພັດທະນາດີຂຶ້ນ.

ນອກຈາກນັ້ນ, ຄະນະຜູ້ແທນທັງສອງຝ່າຍຍັງໄດ້ໄປນະມັດສະການພະເຈົ້າສິງຄຳ ແລະ ຢ້ຽມຊົມສະຖານທີ່ທ່ອງທ່ຽວນ້ຳກັດຢໍລະປາ ອີກດ້ວຍ.

**(ອານຸສອນ ພູມີທອນ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານກຳມະການຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ຮັບຟັງການລາຍງານກ່ຽວກັບວຽກງານພາຍໃນຂອງຄະນະປະຈຳສະພາແຫ່ງຊາດ; ລາຍງານການກະກຽມກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ເຊິ່ງຈະຈັດຂຶ້ນທີ່ແຂວງອຸດົມໄຊ; ລາຍງານຂໍທິດຊີ້ນຳກ່ຽວກັບແຜນການຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ປະຈຳປີ2024; ລາຍງານຜົນການປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ 03 ສະບັບ; ລາຍງານການຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນ 02 ສະບັບ; ລາຍງານແຜນການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຫັນປ່ຽນທີ່ດິນປ່າໄມ້ທຳມະຊາດເປັນທີ່ດິນອຸດສາຫະກຳລັກສະນະຊົ່ວຄາວ ເພື່ອນຳໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ແລະ ແຮ່ຕິດພັນ ຢູ່ເຂດບ້ານນາຕີ, ເມືອງລ້ອງແຈ້ງແຂວງໄຊສົມບູນ ຂອງບໍລິສັດ ໂຈ້ບຸນມີ ພັດທະນາແຮ່ທາດ ຈຳກັດຜູ້ດຽວ; ລາຍງານຜົນການຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບໃຫ້ອົງການປົກຄອງແຂວງ, ນະຄອນຫຼວງພິຈາລະນາອະນຸຍາດສຶກສາສຳຫຼວດເນື້ອທີ່ ແລະ ຜົນກະທົບດ້ານສິ່ງແວດລ້ອມ ເພື່ອລົງທຶນສຳປະທານດ້ານກະສິກຳ-ປ່າໄມ້, ການທ່ອງທ່ຽວ ແລະ ການບໍລິການ;ລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍສືບຕໍ່ນະໂຍບາຍຍົກເວັ້ນພາສີສຳລັບການນຳເຂົ້າຊິ້ນສ່ວນອາໄຫຼ່ລົດບັນທຸກຂະໜາດນ້ອຍ ແລະ ລົດຕູ້ ເພື່ອຜະລິດ ແລະ ປະກອບ ຂອງບໍລິສັດ ໂອໂຕເວີນ (ໂຄລາວ ດີວີລົບພົງ) ຈຳກັດຜູ້ດຽວ; ລາຍງານການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການພິຈາລະນາຮັບຮອງລັດຖະບັນຍັດວ່າດ້ວຍຄ່າເຊົ່າ ແລະຄ່າສຳປະທານຊັບສິນຂອງລັດ; ລາຍງານການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການປັບປຸງອັດຕາອາກອນມູນຄ່າເພີ່ມ;ລາຍງານຜົນສຳເລັດການຈັດກອງປະຊຸມສຳມະນາໄວປາ ຄັ້ງທີ 2 ເຊິ່ງໄດ້ຈັດຂຶ້ນໃນລະຫວ່າງວັນທີ 4-7 ກຸມພາ 2024; ລາຍງານຄືນການກະກຽມຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ ຈຳນວນ04ສະບັບ;ລາຍງານກ່ຽວກັບການກະກຽມກອງປະຊຸມສຳມະນາວຽກງານປະຊາກອນ ແລະ ການພັດທະນາ; ລາຍງານກ່ຽວກັບການກະກຽມຕ້ອນຮັບການມາຢ້ຽມຢາມ ແລະ ຈັດກອງປະຊຸມສຳມະນາຮ່ວມລະຫວ່າງຄະນະ ສສຊ ເພດຍິງ ຂອງສະພາແຫ່ງຊາດຫວຽດນາມ ກັບ ຄະນະ ສສຊ ເພດຍິງ ຂອງສະພາແຫ່ງຊາດລາວ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**




## ຮອງປະທານ...

(ຕໍ່ຈາກໜ້າ 1)

ມາ, ທ່ານຍັງໄດ້ເລົ່າ ຄືນມູນເຊື້ອປະຫວັດຄວາມເປັນມາ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນແຕ່ລະໄລຍະ ໃຫ້ໄດ້ຮັບຮູ້ແລະເຂົ້າໃຈ; ພ້ອມດຽວກັນນັ້ນ, ທ່ານກໍໄດ້ເນັ້ນໃຫ້ສະພາປະຊາຊົນແຂວງ ເອົາໃຈໃສ່ເສີມຂະຫຍາຍບົດບາດສິດເປັນເຈົ້າສິດປະຊາທິປະໄຕຂອງປະຊາຊົນຕາມລັດຖະທຳມະນູນ ແລະກົດໝາຍ, ມີຄວາມສາມັກຄີຮັກແພງກັນພາຍໃນ, ສືບຕໍ່ຊີ້ນຳ-ນຳພາຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍໃຫ້ສູງຂຶ້ນ.

ໃນເວລາຕໍ່ມາ, ທ່ານຮອງ

# ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກວສຊ



(ສພຊ)ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 01 ມີນາ 2024 ທີ່ສະພາແຫ່ງຊາດ (ຕຶກຫຼັງໃໝ່) ໂດຍການເປັນປະທານຮ່ວມຂອງສະຫາຍ ສຸບັນ ສະວະບຸດ ກຳມະການຄະນະພັກສະພາແຫ່ງຊາດ, ເລຂາໜ່ວຍພັກຮາກຖານ ກວສຊ, ສະຫາຍພອນແກ້ວຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ (ສພຊ) ແລະ ສະຫາຍ ຈັນທີ ປັດຊະຍາ ເລຂາໜ່ວຍຊາວໜຸ່ມຮາກຖານ ກວສຊ; ມີບັນດາສະຫາຍເລຂາໜ່ວຍຊາວໜຸ່ມຮາກຖານພາຍໃນ ສພຊ ແລະ ສະມາຊິກຊາວໜຸ່ມຮາກຖານ ກວສຊ ລວມຜູ້ເຂົ້າຮ່ວມທັງໝົດ 38 ສະຫາຍ ຍິງ 10 ສະຫາຍ.

ກອງປະຊຸມໄດ້ຮັບຟັງການຜ່ານບົດລາຍງານການເມືອງ ແລະບົດສຳຫຼວດການນຳພາຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ຈາກນັ້ນ, ໄດ້ເປັນເອກະພາບພິຈາລະນາ, ຮັບຮອງເອົາບັນດາເນື້ອໃນສຳຄັນຄື: ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາ ແຕ່ປີ 2020-2024 ໃນນັ້ນ ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ໜ່ວຍຊາວໜຸ່ມຮາກຖານ ກວສຊ ຍາດມາໄດ້ ພ້ອມທັງຍົກໃຫ້ເຫັນດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງໜ່ວຍຊາວໜຸ່ມຮາກຖານ ໃຫ້ດີຂຶ້ນກວ່າເກົ່າ; ກຳນົດທິດທາງການເຄື່ອນໄຫວວຽກງານຂອງຄະນະໜ່ວຍຊາວໜຸ່ມຮາກຖານກວສຊ ໄລຍະ 5 ປີ (2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງ-ແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ກວສຊ ໄປພ້ອມກັບການ ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ແຜນການທີ່ວາງໄວ້ໃຫ້ມີປະສິດທິພາບ ແລະປະສິດທິຜົນສູງຂຶ້ນກວ່າເກົ່າ. ບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານ ກ່ຽວກັບການຊີ້ນຳ-ນຳພາຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະ5ປີຜ່ານມາເຊິ່ງຍົກໃຫ້ເຫັນດ້ານດີຜົນງານ,ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸມຮາກຖານຊຸດໃໝ່ ຈະຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກວສຊ ບັນລຸຕາມຄາດໝາຍທີ່ວາງໄວ້.

ກອງປະຊຸມໄດ້ເສີມຂະຫຍາຍປະຊາທິປະໄຕ ເລືອກຕັ້ງເອົາຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ຊຸດໃໝ່ ເຊິ່ງປະກອບມີ 3 ສະຫາຍ ຍິງ 1 ສະຫາຍ, ໃນນັ້ນ, ກອງປະຊຸມເຫັນດີເລືອກເອົາສະຫາຍ ແສງຈັນ ຊ່ວງພູທອນ ເປັນເລຂາຄະນະໜ່ວຍຊາວໜຸ່ມຮາກຖານ, ສະຫາຍນາງ ໂມລີນາອິນສີຊຽງໃໝ່ ເປັນຮອງເລຂາ ທັງເປັນປະທານກວດກາ, ບົ່ງຕົວແຕ່ງຕັ້ງສະຫາຍ ວິລະພົນ ສີລາເພັດເປັນຮອງປະທານກວດກາ ແລະ ເລືອກເອົາສະຫາຍ ປານຄຳ ພົມມະຈັກ ເປັນກຳມະການ ຮັບຜິດຊອບວຽກ 4 ບຸກ ຂອງໜ່ວຍຊາວໜຸ່ມຮາກຖານ.

ໃນໂອກາດນີ້, ສະຫາຍ ສຸບັນ ສະວະບຸດ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ເຊິ່ງເນັ້ນໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ພ້ອມສະມາຊິກຊາວໜຸ່ມພາຍໃນໜ່ວຍທັງໝົດເອົາໃຈໃສ່ບາງບັນຫາທີ່ສຳຄັນຄື: ຕັ້ງໜ້າສຶກສາອົບຮົມສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ; ມີຄຸນສົມບັດສິນທຳປະຕິວັດ; ຮັກຊາດ, ຮັກລະບອບປະຊາທິປະໄຕເປັນແບບຢ່າງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ແລະ ການດຳລົງຊີວິດ; ຮັກສາຈັນຍາບັນພະນັກງານຂອງຕົນ ໃນນັ້ນ ຮັກສາຈັນຍາບັນຕໍ່ຕົນເອງ, ຕໍ່ອາຊີບ ແລະ ຕໍ່ການຈັດຕັ້ງ; ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີ, ມີທັດສະນະມະຫາຊົນ, ມີຄວາມດຸໝັ່ນອົດທົນ, ຄົ້ນຄວ້າສຶກສາຮ່ຳຮຽນຍົກລະດັບຄວາມຮູ້-ຄວາມສາມາດໃນການປະຕິບັດວຽກງານໃຫ້ສູງຂຶ້ນເລື້ອຍໆ; ສ້າງແລະເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານຊາວໜຸ່ມໃຫ້ຫຼາຍ, ມີບັນຍາກາດຟົດຟື້ນ, ຫ້າວຫັນ ໂດຍມີເນື້ອໃນຕິດພັນກັບການສຶກສາອົບຮົມໄປພ້ອມໆກັນ; ຍົກສູງສະຕິໃນການບໍລິໂພກຂ່າວສານ ໂດຍມີການກັ່ນຕອງເລືອກເຟັ້ນເອົາສິ່ງທີ່ດີ, ຖືກຕ້ອງແລະສາມາດໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢ່າງມີປະສິດທິຜົນ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**






## ຍົກສູງ...

(ຕໍ່ຈາກໜ້າ 1)

ຊຸມສຳມະນາຍົກສູງບົດບາດການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳວຽກງານກຳມາທິການບັນດາເຜົ່າ, ທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າແລະທ່ານທອງພັດ ວົງມະນີ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້; ມີບັນດາທ່ານຮອງປະທານກບຜ, ຮອງປະທານສະພາປະຊາຊົນຂັ້ນແຂວງ ຜູ້ຊີ້ນຳຂົງເຂດວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ກຳມະການຂອງ ກບຜ ປະຈຳເຂດເລືອກຕັ້ງທົ່ວປະເທດ, ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງສູນກາງ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະພະນັກງານຂອງ ກບຜ ເຂົ້າຮ່ວມ.

ທ່ານ ຄຳຈັນ ໂສຕາປະເສີດ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ກອງປະຊຸມຈະໄດ້ຮັບຟັງການສະເໜີບົດຂອງກຳມາທິການບັນດາເຜົ່າ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ແລກປ່ຽນບົດຮຽນໃນແຕ່ລະບັນຫາ. ດັ່ງທີ່ພວກເຮົາຮູ້ແລ້ວວ່າ ວິໄສທັດຮອດປີ 2030 ລັດເຮົາໄດ້ວາງຄາດໝາຍແກ້ໄຂຢ່າງສິ້ນເຊີງ; ປະຊາຊົນບັນດາເຜົ່າ ມີພູມລຳເນົາ, ແຫຼ່ງລາຍຮັບໝັ້ນຄົງ, ເຂົ້າເຖິງການບໍລິການສາທາລະນະຢ່າງທົ່ວເຖິງແລະມີຄຸນນະພາບ; ຊົນນະບົດໄດ້ຮັບການພັດທະນາແບບຍືນຍົງຢູ່ໃນລະດັບໃກ້ຄຽງກັບຕົວເມືອງ ແລະ ປະກອບສ່ວນສຳຄັນເຂົ້າໃນການເຊື່ອມໂຍງເສດຖະກິດກັບສາກົນ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ; ລະບົບການເມືອງ-ການປົກຄອງຂັ້ນຮາກຖານມີຄວາມໜັກແໜ້ນ, ເຂັ້ມແຂງຕາມທິດ 3 ສ້າງ; ທົ່ວສັງຄົມມີຄວາມສະຫງົບ-ປອດໄພ ຢ່າງໜັກແໜ້ນ. ເພື່ອປະຕິບັດແຜນພັດທະນາເສດຖະກິດ-ສັງຄົມເວົ້າລວມ, ເວົ້າສະເພາະວຽກງານພັດທະນາຊົນນະບົດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະປະກອບສ່ວນທີ່ສຳຄັນ, ມີໝາກຜົນນັ້ນ ຮຽກຮ້ອງມາຍັງບັນດາທ່ານຈຶ່ງໄດ້ຍົກສູງຄວາມຮັບຜິດຊອບຂອງຕົນເພື່ອຄົ້ນຄວ້າແລະແລກປ່ຽນຄຳຄິດຄຳເຫັນຢ່າງມີຈຸດສຸມ ເຂົ້າໃສ່ວຽກງານດັ່ງກ່າວ; ກອງປະຊຸມສຳມະນາຄັ້ງນີ້ ຈະເຂົ້າໃຈເພີ່ມຕື່ມກ່ຽວກັບຄວາມຮັບຜິດຊອບ, ບັນດານິຕິກຳ, ກົນໄກການປະສານງານລະຫວ່າງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງກັບຂະແໜງການຕ່າງໆທີ່ກ່ຽວຂ້ອງໃນຂົງເຂດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

ກອງປະຊຸມໄດ້ຮັບຟັງການສະເໜີບົດລາຍງານຜົນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024; ຜົນການຕິດຕາມກວດກາບັນດາຄາດໝາຍດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິ 82/ສພຊ ໄລຍະຜ່ານມາ; ນິຕິກຳກ່ຽວກັບວຽກງານພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກຂອງປະຊາຊົນ ຕາມຄຳສັ່ງຂອງກົມການເມືອງສູນກາງພັກ ສະບັບເລກທີ 097/ກມສພ, ລົງວັນທີ 18 ກຸມພາ 2020 ແລະ ຄຳສັ່ງແນະນຳຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 233/ຄລສພ, ລົງວັນທີ 7 ພະຈິກ 2022; ການກຳນົດຈຸດສຸມພັດທະນາທີ່ເປັນບຸລິມະສິດ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໄລຍະ 2021-2025 ຕາມຂໍ້ຕົກລົງສະບັບເລກທີ 72/ສຍ, ລົງວັນທີ 11 ສິງຫາ 2022 ແລະ ການພັດທະນາບັນດາຈຸດສຸມທີ່ກຳນົດໄວ້; ມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ແລະການປະເມີນການພົ້ນທຸກ ແລະ ການພັດທະນາຕາມດຳລັດສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017; ບາງເນື້ອໃນກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ສະບັບເລກທີ 45/ສພຊ, ລົງວັນທີ 15 ມິຖຸນາ 2018 ແລະ ຜົນການຈັດຕັ້ງປະຕິບັດ 25 ຈຸດສຸມຈັດສັນພູມລຳເນົາແລະອາຊີບຕາມຂໍ້ຕົກລົງສະບັບເລກທີ 72/ນຍ, ລົງວັນທີ 11 ສິງຫາ 2022; ບາງເນື້ອໃນມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍກົນໄກປະສານງານລະຫວ່າງກຳມາທິການບັນດາເຜົ່າສະພາແຫ່ງຊາດກັບບັນດາກະຊວງ-ອົງການທີ່ກ່ຽວຂ້ອງ ສະບັບເລກທີ 109/ຄປຈ, ລົງວັນທີ 11 ພຶດສະພາ 2023.

**(ນາງ ຕາດຳ ທ່ານຟ້າ)**

## ຄະນະ...

(ຕໍ່ຈາກໜ້າ 1)

ພວງມາລາຢູ່ອານຸສາວະລີນ້ຳໃຈສາມັກຄີສູ້ຮົບ ລາວ-ຫວຽດນາມ ເນື່ອງໃນໂອກາດທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ທີ່ຈັດຂຶ້ນຢູ່ແຂວງອຸດົມໄຊ.

ການວາງພວງມາລາໃນຄັ້ງນີ້, ເພື່ອສະແດງຄວາມກະຕັນຍູກະຕະເວທີຮູ້ບຸນຄຸນຢ່າງຍິ່ງຕໍ່ນ້ຳໃຈສາມັກຄີສູ້ຮົບອັນພິລະອາດຫານຂອງນັກຮົບຜູ້ເກັ່ງກ້າສາມາດລາວ-ຫວຽດນາມ, ຫວຽດນາມ-ລາວ; ເພື່ອໄຫວ້ອາໄລເຖິງດວງວິນຍານຂອງນາຍ ແລະ ພົນທະຫານ, ພະນັກງານ-ນັກຮົບ, ທະຫານອາສາສະໝັກຫວຽດນາມທີ່ໄດ້ເສຍສະຫຼະຊີວິດແລະເລືອດເນື້ອ ປະກອບສ່ວນເຂົ້າໃນພາລະກິດປະຕິວັດເພື່ອກອບກູ້ເອກະລາດໃນສະໄໝສົງຄາມຢູ່ 6 ແຂວງພາກເໜືອຂອງລາວ.

**(ນາງ ກຸກກິກ ບຸດດາໄຊ)**

## ຄະນະເລຂາທິການ...

(ຕໍ່ຈາກໜ້າ 1)

ແລະ ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດຫວຽດນາມ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນກອງປະຊຸມ, ສະຫາຍ ບຸນຄົງ ຫຼ້າຈຽມພອນ ກຳມະການສຳຮອງສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງອຸດົມໄຊ ໄດ້ກ່າວຄຳເຫັນຕ້ອນຮັບ ແລະ ຊົມເຊີຍການຈັດຕັ້ງກອງປະຊຸມຄັ້ງນີ້ ແລະ ແຈ້ງສະພາບພົ້ນເດັ່ນຂອງແຂວງ ໃຫ້ບັນດາຜູ້ແທນທັງສອງຝ່າຍຊາບ.

ກອງປະຊຸມສຳມະນາຄັ້ງນີ້ ເປັນການປະກອບສ່ວນຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ ສອງລັດ ແລະ ປະຊາຊົນສອງຊາດ ກໍຄືສອງສະພາແຫ່ງຊາດ ລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ໄດ້ຮັບຜົນສຳເລັດເປັນກ້າວໆ, ທັງເປັນການສະຫຼຸບຕີລາຄາການຈັດຕັ້ງປະຕິບັດເນື້ອໃນບົດບັນທຶກວ່າດ້ວຍການພົວພັນຮ່ວມມືຂອງສອງຝ່າຍ ໃນໄລຍະປີ 2022-2024 ແລະ ທິດທາງແຜນການໄລຍະປີ 2024-2026; ເປັນໂອກາດດີເພື່ອແລກປ່ຽນບົດຮຽນຮ່ວມກັນໃນດ້ານການຫັນເປັນຫ້ອງສະໝຸດທັນສະໄໝ ແລະການລິເລີ່ມສ້າງຊ່ອງໂທລະພາບຂອງສະພາແຫ່ງຊາດລາວ. ໃນກອງປະຊຸມ ຍັງໄດ້ສຸມໃສ່ປະກອບຄຳເຫັນ ແລະ ປຶກສາຫາລືຮ່ວມກັນຢ່າງຈິງໃຈ, ກົງໄປກົງມາບົນຈິດໃຈຄວາມສາມັກຄີພິເສດ ລາວ-ຫວຽດນາມ.

ສະຫາຍ ນາງ ປິ່ງຄຳ ລາຊະສິມມາ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ໂດຍໄດ້ເນັ້ນໜັກວ່າ: ການພົບປະລະຫວ່າງສອງຫ້ອງວ່າການສະພາແຫ່ງຊາດລາວ-ຫວຽດນາມ ເປັນປະເພນີອັນດີງາມທີ່ສືບທອດມາຫຼາຍຊຸດຂອງສອງສະພາແຫ່ງຊາດ ເພື່ອສ້າງເງື່ອນໄຂໃຫ້ພະນັກງານ-ລັດຖະກອນຂອງສອງສະພາແຫ່ງຊາດ ກໍຄືສອງຫ້ອງວ່າການສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ພົບປະ, ທຳຄວາມລຶ້ງເຄີຍ, ເສີມຂະຫຍາຍສາຍພົວພັນຮ່ວມມື, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນວຽກງານຂອງແຕ່ລະພາກສ່ວນ. ການພົບປະໃນຄັ້ງນີ້ຍັງເປັນການຜັນຂະຫຍາຍຜົນການພົບປະ ແລະ ຢ້ຽມຢາມສັນຖະວະໄມຕີຢ່າງເປັນທາງການຂອງຄະນະຜູ້ແທນຂັ້ນສູງຂອງສອງສະພາແຫ່ງຊາດ ສປປລາວ ແລະສສ.ຫວຽດນາມ, ເຊິ່ງສອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ໄດ້ເຫັນດີນຳກັນໃນການລົງນາມສາຍພົວພັນຮ່ວມມືກ່ຽວກັບການສ້າງເງື່ອນໄຂໃຫ້ກົງຈັກເສນາທິການຂອງສະພາແຫ່ງຊາດລາວ-ຫວຽດນາມ ສືບຕໍ່ພົບປະແລກປ່ຽນບົດຮຽນນຳກັນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກົງຈັກເສນາທິການດ້ານຕ່າງໆ ແນໃສ່ເຮັດໃຫ້ການເປັນເສນາທິການ ນັບມື້ມີປະສິດທິພາບ-ປະສິດທິຜົນສູງຂຶ້ນ ທັງສ້າງເງື່ອນໄຂໃຫ້ແກ່ທັງສອງພາກສ່ວນເຄື່ອນໄຫວວຽກງານໃນເງື່ອນໄຂການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ໂດຍຫັນໄປສູ່ທັນສະໄໝ, ກ້າວເຂົ້າສູ່ຄຸນນະພາບອັນໃໝ່ໆແລະ ນັບມື້ມີຫຼາກຫຼາຍສີສັນ. ພ້ອມກັນນັ້ນ, ເປັນການສ້າງເງື່ອນໄຂໃຫ້ແກ່ການແລກປ່ຽນບົດຮຽນ, ປະສົບການ ໃນການເປັນເສນາທິການຮັບໃຊ້ວຽກງານຂອງສະພາແຫ່ງຊາດ.

ໃນກອງປະຊຸມຄັ້ງນີ້, ສະຫາຍ ບຸ່ຍ ວັນ ເກື່ອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ເລຂາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຕີລາຄາສູງການດຳເນີນກອງປະຊຸມແລກປ່ຽນບົດຮຽນໃນຄັ້ງນີ້, ທົບທວນຄືນໝາກຜົນການຮ່ວມມືສອງຝ່າຍໃນໄລຍະຜ່ານມາ ແລະ ໄດ້ສະແດງຄວາມກຽມພ້ອມທີ່ຈະສະໜັບສະໜູນ ສປປ ລາວເວົ້າລວມ, ສະພາແຫ່ງຊາດລາວໃນການເປັນປະທານໄອປາ ຄັ້ງທີ 45 ໃນທ້າຍປີ 2024 ແລະ ໄດ້ຢືນຢັນຈະສືບຕໍ່ເສີມຂະຫຍາຍສາຍພົວພັນພິເສດຫວຽດນາມ-ລາວ ໃຫ້ນັບມື້ນັບມີປະສິດທິຜົນຍິ່ງໆຂຶ້ນ.

ໃນກອງປະຊຸມສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມ ໂດຍໄດ້ເນັ້ນໜັກວ່າ: ກອງປະຊຸມພົບປະ ແລະ ແລກປ່ຽນບົດຮຽນລະຫວ່າງສອງຫ້ອງວ່າການສະພາແຫ່ງຊາດລາວ-ຫວຽດນາມ ເປັນກົນໄກທີ່ສຳຄັນຂອງສອງສະພາແຫ່ງຊາດ ເຊິ່ງທຸກໆ 2 ປີ ທັງສອງຝ່າຍໄດ້ຜັດປ່ຽນກັນເປັນເຈົ້າພາບ, ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບອັນຫຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ. ຄະນະປະຈຳສະພາແຫ່ງຊາດລາວ ຕີລາຄາສູງຕໍ່ກອງປະຊຸມສຳມະນາແລກປ່ຽນບົດຮຽນໃນຄັ້ງນີ້ ເຊິ່ງສອງຝ່າຍຈະໄດ້ຮ່ວມກັນຕີລາຄາຄືນຕໍ່ໝາກຜົນການປະສານສົມທົບ, ການພົວພັນຮ່ວມມືລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ໃນໄລຍະຜ່ານມາ ໃນການເປັນເສນາທິການຮອບດ້ານໃຫ້ແກ່ສະພາແຫ່ງຊາດ ກໍຄືຄະນະປະຈຳສະພາແຫ່ງຊາດ ເປັນຕົ້ນການຕ້ອນຮັບ ແລະ ແລກປ່ຽນການຢ້ຽມຢາມ, ການຕິດຕາມກວດກາ, ການພົວພັນຮ່ວມມືໃນເວທີລັດຖະສະພາພາກພື້ນ ແລະສາກົນ, ການຈັດຕັ້ງກອງປະຊຸມສຳມະນາແລກປ່ຽນບົດຮຽນ, ການບຳລຸງສ້າງພະນັກງານ-ຍົກລະດັບພາສາຫວຽດ, ການສົ່ງພະນັກງານໄປຝຶກງານ, ວຽກງານຫໍສະໝຸດ, ວຽກງານຫໍມູນເຊື້ອຂອງສະພາແຫ່ງຊາດ, ວຽກງານບຳລຸງກໍ່ສ້າງພະນັກງານດ້ານເຕັກນິກໃນຂົງເຂດຄຸ້ມຄອງ, ບູລະນະ, ສ້ອມແປງ ແລະ ນຳໃຊ້ຫໍສະພາແຫ່ງຊາດ ໃຫ້ນັບມື້ນັບມີປະສິດທິຜົນ ແລະ ໄດ້ສະແດງຄວາມເຊື່ອໝັ້ນວ່າສອງຫ້ອງວ່າການຂອງສອງສະພາແຫ່ງຊາດຈະສືບຕໍ່ປະສານສົມທົບ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນ ເພື່ອເຮັດຫຼ້ອນໜ້າທີ່ການເມືອງຂອງຕົນ.

**(ນາງ ກຸກກິກ ບຸດດາໄຊ)**

## ສະຫາຍ ປອ...

(ຕໍ່ຈາກໜ້າ 1)

ໜ້າຫ້ອງວ່າການສະພາແຫ່ງຊາດຫວຽດນາມ ທີ່ເດີນທາງມາເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ທີ່ຈັດຂຶ້ນຢູ່ແຂວງອຸດົມໄຊ ລະຫວ່າງວັນທີ 05-08 ມີນາ 2024.

ຮອງປະທານສະພາແຫ່ງຊາດ ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ມີໂອກາດຕ້ອນຮັບສະຫາຍ ບຸ່ຍ ວັນ ເກື່ອງ ກຳມະການສູນກາງພັກ, ເລຂາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດນຳພາຄະນະຜູ້ແທນຫ້ອງວ່າການສະພາແຫ່ງຊາດຫວຽດນາມມາເຂົ້າຮ່ວມກອງປະຊຸມສຳມະນາແລກປ່ຽນບົດຮຽນຄັ້ງທີXII ລະຫວ່າງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ທີ່ແຂວງອຸດົມໄຊ ສປປລາວ. ສະຫາຍຮອງປະທານໄດ້ສະແດງຄວາມປິຕິຍິນດີຕໍ່ບັນດາຜົນສຳເລັດຮອບ ດ້ານໃນການພັດທະນາເສດຖະກິດ-ສັງຄົມຂອງຫວຽດນາມ ໃນທ່າມກາງສະພາບຂອງພາກພື້ນ, ໂລກເຕັມໄປດ້ວຍສິ່ງທ້າທາຍ ເຊິ່ງເຮັດໃຫ້ສສ.ຫວຽດນາມ ສືບຕໍ່ມີສະຖຽນລະພາບທາງການເມືອງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ, ເສດຖະກິດພັດທະນາດ້ວຍຈັງຫວະໄວ ແລະ ສູງ, ກາຍເປັນຈຸດສະຫວ່າງໃຫ້ແກ່ປະຊາຄົມໂລກພາຍຫຼັງການ ແຜ່ລະບາດຂອງໂກວິດ-19, ອັນໄດ້ສ້າງຄວາມເຊື່ອໝັ້ນສູງຂອງປະຊາຊົນທີ່ມີຕໍ່ການນຳພາອັນຖືກຕ້ອງ, ສະຫຼາດສ່ອງໃສຂອງພັກກອມມູນິດຫວຽດນາມ; ສະແດງຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ເຖິງວ່າສະພາບການພາກພື້ນ, ສາກົນ ພວມມີການຜັນແປຢ່າງສັບສົນ, ສະຫຼັບຊັບຊ້ອນ ແລະ ວ່ອງໄວກໍຕາມ, ແຕ່ມິດຕະພາບອັນຍິ່ງໃຫຍ່, ຄວາມສາ ມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໂດຍແມ່ນປະທານໂຮຈິມິນ ຜູ້ຍິ່ງໃຫຍ່, ປະທານໄກສອນ ພົມວິຫານ ແລະ ປະທານສຸພານຸວົງ ທີ່ເຄົາລົບຮັກ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຮັບການສືບທອດຈາກການນຳຮຸ່ນຕໍ່ໆມາ ໂດຍໄດ້ເອົາໃຈໃສ່ຖະນຸຖະໜອມ, ປົກປັກຮັກສາ ແລະ ເພີ່ມພູນຄູນສ້າງມານັ້ນພວມສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງກວ້າງຂວາງ ແລະ ເລິກເຊິ່ງ, ປະຊາຊົນທັງສອງປະເທດ ໂດຍສະເພາະຄົນຮຸ່ນໜຸ່ມໄດ້ມີຄວາມເຂົ້າໃຈຕໍ່ມູນເຊື້ອແຫ່ງສາຍພົວພັນທີ່ບໍລິສຸດ, ຜຸດຜ່ອງ, ໃສແຈ້ງ ແລະ ເຫັນໄດ້ຄວາມຮັບຜິດຊອບຂອງຕົນ ໃນການສືບຕໍ່ຮ່ວມກັນປົກປັກຮັກສາສາຍພົວພັນພິເສດນັ້ນ ໃຫ້ນັບມື້ນັບຈະເລີນງອກງາມແລະມີໝາກມີຜົນເລື້ອຍໆໄປ.

ສະຫາຍຮອງປະທານສະພາແຫ່ງຊາດລາວ ໄດ້ເນັ້ນໜັກວ່າ: ກອງປະຊຸມສຳມະນາແລກປ່ຽນບົດຮຽນໃນຄັ້ງນີ້ ເປັນກິດຈະການໜຶ່ງທີ່ສຳຄັນ, ທັງສອງຝ່າຍຈະໄດ້ຮ່ວມກັນທົບທວນຄືນການພົວພັນຮ່ວມມືໄລຍະ2 ປີຜ່ານມາ ແລະ ປຶກສາຫາລືບົດຮຽນໃນດ້ານຕ່າງໆ ກໍຄືຈະໄດ້ມີການກຳນົດທິດທາງແຜນການໃນຕໍ່ໜ້າ. ກອງປະຊຸມດັ່ງກ່າວຈະເປັນໂອກາດທີ່ດີໃຫ້ຄະນະນຳ, ພະນັກງານລັດຖະກອນ ຂອງສອງສະພາແຫ່ງຊາດ ລາວ ແລະ ຫວຽດນາມ ໄດ້ມີການປຶກສາຫາລື, ແລກປ່ຽນບົດຮຽນ ແລະ ປະສົບການ ໃນການເປັນເສນາທິການຮອບດ້ານໃຫ້ແກ່ອົງການນິຕິບັນຍັດ ທັງເປັນການເພີ່ມທະວີຄວາມສາມັກຄີຮັກແພງ ແລະຄວາມໃກ້ຊິດເຊິ່ງກັນແລະກັນ ໂດຍຜ່ານການແລກປ່ຽນວັດທະນະທຳ-ສິ ລະປະວັນນະຄະດີ, ສ້າງຂະບວນການກິລາ ແລະ ກິດຈະກຳທ່ອງທ່ຽວ ເຊິ່ງທັງໝົດເຫຼົ່ານີ້ ເປັນການປະກອບສ່ວນໃນການເພີ່ມພູນຄູນສ້າງມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ກໍຄືລະຫວ່າງສອງສະພາແຫ່ງຊາດ ເວົ້າລວມ, ເວົ້າສະເພາະລະຫວ່າງສອງຫ້ອງວ່າການສະພາແຫ່ງຊາດ ໃຫ້ນັບມື້ກ້າວສູ່ລວງເລິກຍິ່ງໆຂຶ້ນ.

ຮອງປະທານສະພາແຫ່ງຊາດ ໄດ້ຕີລາຄາສູງ ໃນປີ2022 ຜ່ານມາ, ສະພາແຫ່ງຊາດທັງສອງປະເທດໄດ້ມີກິດຈະກຳຫຼາກຫຼາຍ ເພື່ອພ້ອມກັນສະເຫຼີມສະຫຼອງສອງວັນປະຫວັດສາດຂອງສອງຊາດຢ່າງເປັນຂະບວນຟົດຟື້ນ ແລະ ໃນປີ 2023 ຜ່ານມາ ໃນການພົວພັນລະຫວ່າງອົງການນິຕິບັນຍັດຂອງພວກເຮົາ ໄດ້ມີເຫດການທີ່ພົ້ນເດັ່ນນັ້ນຄື: ການຈັດກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ກຳປູເຈຍ-ລາວ-ຫວຽດນາມ ຄັ້ງທີ 1 ທີ່ສປປລາວ ໃນເດືອນທັນວາ 2023 ທີ່ຜ່ານມາ ໂດຍມີການເຂົ້າຮ່ວມຂອງຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ນຳໂດຍສະຫາຍ ເວືອງດິ່ງເຫວະ(Vương Đình Huệ) ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດຫວຽດນາມ ເຊິ່ງຄະນະຍັງໄດ້ຢ້ຽມຢາມ ແລະເຮັດວຽກຢູ່ ສປປ ລາວ ຕື່ມອີກ ອັນເປັນການປຸກລະດົມໃຫ້ກຳລັງໃຈອັນແຮງກ້າ ແລະ ສະໜັບສະໜູນຢ່າງຫຼວງຫຼາຍໃຫ້ແກ່ສະພາແຫ່ງຊາດ ສປປລາວ.

ຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຂອບໃຈສະພາແຫ່ງຊາດຫວຽດນາມ ທີ່ໃນປີ 2024 ສປປ ລາວ ເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຝ່າຍຫວຽດນາມ ຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ ສປປລາວ ໃນການເປັນເຈົ້າພາບກອງປະຊຸມສຳຄັນດັ່ງກ່າວ.

ໃນຕອນທ້າຍ ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ພັກ, ລັດ ແລະ ປະຊາຊົນລາວ ສະແດງຄວາມຂອບໃຈຢ່າງຈິງໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງທີ່ຍາມໃດກໍຢືນຢູ່ຄຽງຂ້າງປະຊາຊົນລາວ, ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອອັນລ້ຳຄ່າປະສິດທິຜົນ ແລະ ທັນການ ໃຫ້ແກ່ປະຊາຊົນລາວ ທັງໃນພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄືໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດໃນປັດຈຸບັນ ແລະ ຂໍອວຍພອນໃຫ້ບັນດາສະຫາຍຫວຽດນາມ ຈົ່ງສືບຕໍ່ຍາດໄດ້ຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າໃນການປະຕິບັດບັນດາມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XIII ຂອງພັກ ແລະກ້າວໄປເຖິງການກະກຽມກອງປະຊຸມໃຫຍ່ຄັ້ງ XIV ຂອງພັກ ຢ່າງໜັກແໜ້ນ, ນຳເອົາ ສສ.ຫວຽດນາມ ກ້າວຂຶ້ນຢ່າງມີໄຊ.

ສະຫາຍ ບຸ່ຍ ວັນ ເກື່ອງ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ສະຫາຍຮອງປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະຕີລາຄາສູງກ່ຽວກັບໝາກຜົນການຮ່ວມມືໃນໄລຍະປີ2022-2024. ສອງຝ່າຍເຫັນວ່າ ວຽກງານການປະສານສົມທົບຮັບໃຊ້ໃຫ້ແກ່ການແລກປ່ຽນຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆ ລະຫວ່າງສະພາແຫ່ງຊາດສອງປະເທດ; ແລກປ່ຽນດ້ານວິຊາການ, ຈັດຕັ້ງຮັບໃຊ້ບັນດາການຢ້ຽມຢາມເຄື່ອນໄຫວ ແລະ ພັກຜ່ອນ, ກວດກາສຸຂະພາບ ໃຫ້ແກ່ການນຳ ແລະ ອະດີດການນຳສະພາແຫ່ງຊາດ, ຈັດຕັ້ງກອງປະຊຸມທາງໄກ, ກອງປະຊຸມແລກປ່ຽນບົດຮຽນ, ການຄຸ້ມຄອງຫ້ອງການສະພາແຫ່ງຊາດ ຫໍສະພາແຫ່ງຊາດ, ສ້າງຫ້ອງມູນເຊື້ອສະພາແຫ່ງຊາດ, ວຽກງານບຳລຸງກໍ່ສ້າງພະນັກງານສືບຕໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ, ແທດເໝາະກັບສະພາບຕົວຈິງ ແລະ ນັບມື້ນັບກ້າວເຂົ້າສູ່ລວງເລິກ, ຕອບສະໜອງຄວາມຮຽກຮ້ອງຕ້ອງການດ້ານໜ້າທີ່ການເມືອງ, ດ້ານວິຊາສະເພາະ ແລະ ມູນເຊື້ອ ທີ່ມີມາແຕ່ດົນນານຕາມທິດຊີ້ນຳຂອງການນຳສະພາແຫ່ງຊາດສອງປະເທດ.

**(ນາງ ກຸກກິກ ບຸດດາໄຊ)**

# ກອງປະຊຸມປະຈຳປີ 2023 ຄະນະເລຂາທິການ ສະພາປະຊາຊົນແຂວງຫຼວງນ້ຳທາ




(ສພຊ) ວັນທີ 21 ກຸມພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ໂດຍການການເປັນປະທານຂອງທ່ານ ມີໄຊ ມີວິໄລ ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ກົງເພັດ ແກ້ວບົວພາຮອງປະທານສະພາປະຊາຊົນແຂວງ ທັງເປັນຜູ້ຊີ້ນຳວຽກງານເລຂາທິການ; ບັນດາທ່ານປະທານ-ຮອງປະທານຄະນະກຳມະການພາຍໃນສະພາປະຊາຊົນແຂວງ, ຜູ້ປະສານງານທີ່ກ່ຽວຂ້ອງຂອງແຂວງ, ຫົວໜ້າ, ຮອງຫົວໜ້າຂະແໜງການ, ຜູ້ຊ່ວຍວຽກປະຈຳເຂດເລືອກຕັ້ງເມືອງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ 42 ຄົນ ຍິງ 18 ຄົນ.

ກອງປະຊຸມ ໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ເຊິ່ງຄະນະເລຂາທິການແມ່ນອົງການຈັດຕັ້ງໜຶ່ງຂອງສະພາປະຊາຊົນແຂວງ ປະຕິບັດພາລະບົດບາດເປັນເສນາທິການໃຫ້ແກ່ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງໃນການຈັດຕັ້ງປະຕິບັດ 3 ພາລະບົດບາດ, ດ້ານນິຕິກຳ, ດ້ານຕົກລົງບັນຫາສຳຄັນຂອງທ້ອງຖິ່ນ, ການຕິດຕາມກວດກາ ແລະ ຄະນະເລຂາທິການມີ 3 ຂະແໜງການທີ່ຂຶ້ນກັບຄື: ຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ, ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ, ຂະແໜງຊ່ວຍວຽກສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ; ໃນໄລຍະໜຶ່ງປີຜ່ານມາຄະນະເລຂາທິການໄດ້ນຳເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິ ແລະ ນິຕິກຳຕ່າງໆຂອງລັດມາເຜີຍແຜ່ເຊື່ອມຊຶມເປັນປົກກະຕິ, ໄດ້ສຳເລັດບັນດາເນື້ອໃນ ແລະ ເອກະສານປື້ນອ້ອມກອງປະຊຸມສະໄໝສາມັນເທື່ອທີ 5, 6 ຂອງສະພາປະຊາຊົນແຂວງຊຸດທີ 2 ແລະ ກອງປະຊຸມພາຍໃນສະພາປະຊາຊົນແຂວງ, ໄດ້ອຳນວຍຄວາມສະດວກ ໃນການເປັນເສນາທິການທີ່ດີທີ່ຕົນເອງຮັບຜິດຊອບ ໄດ້ສຳເລັດຫຼາຍໜ້າວຽກພໍສົມຄວນ; ນອກນັ້ນ, ຍັງໄດ້ວາງທິດທາງແຜນການປະຈຳປີ 2024 ຈະສືບຕໍ່ເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິ ແລະ ນິຕິກຳຕ່າງໆຂອງລັດ ມາເຜີຍແຜ່ເຊື່ອມຊຶມໃຫ້ເລິກເຊິ່ງກວ່າເກົ່າ, ສືບຕໍ່ຮ່າງເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 7-8 ຂອງສະພາປະຊາຊົນແຂວງ, ຄົ້ນຄວ້າສ້າງຮ່າງແຜນການ, ເອກະສານທີ່ກ່ຽວຂ້ອງໃຫ້ແກ່ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ແລະ ກອງປະຊຸມຕ່າງໆ ແລະ ສືບຕໍ່ຊີ້ນຳ-ນຳພາວຽກງານທີ່ຕົນຮັບຜິດຊອບໃຫ້ສຳເລັດ.

ຈາກນັ້ນ, ຍັງໄດ້ຮັບຟັງບັນດາຂະແໜງທີ່ຂຶ້ນກັບຄະນະເລຂາທິການສະພາປະຊາຊົນແຂວງ ປະກອບຄຳຄິດເຫັນ ແລະ ສະເໜີວິທີແກ້ໄຂປັບປຸງວຽກງານທີ່ຍັງຄົງຄ້າງ ແລະ ຜູ້ແທນເຂົ້າຮ່ວມກອງປະຊຸມຍັງໄດ້ແລກປ່ຽນປະກອບຄຳຄິດເຫັນຕໍ່ກັບຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງຄະນະເລຂາທິການສະພາປະຊາຊົນແຂວງ ແລະ ວຽກງານການພົວພັນປະສານງານກັບອົງການທີ່ກ່ຽວຂ້ອງຂອງແຂວງ, ເມືອງ ຢ່າງກົງໄປກົງມາ ເພື່ອເຮັດໃຫ້ຮ່າງບົດສະຫຼຸບ ມີເນື້ອໃນຖືກຕ້ອງ, ສອດຄອງ, ສົມບູນຂຶ້ນກວ່າເກົ່າ ສາມາດນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ສຳເລັດຕາມຄາດໝາຍແລະເຮັດໃຫ້ວຽກງານການປະສານງານຕ່າງໆ ໃນການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງມີການປະສານງານທີ່ດີ ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອເຮັດໃຫ້ການເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ ໄດ້ຮັບຜົນສຳເລັດແລະມີຄຸນນະພາບຂຶ້ນກວ່າເກົ່າ.

ໃນຕອນທ້າຍ, ທ່ານ ກົງເພັດ ແກ້ວບົວພາ ໄດ້ມີຄຳເຫັນໂອ້ລົມວ່າ: ກອງປະຊຸມຂອງຄະນະເລຂາທິການສະພາປະຊາຊົນແຂວງ ແມ່ນສຳຄັນຫຼາຍເພາະເປັນເສນາທິການໃຫ້ແກ່ສະພາປະຊາຊົນແຂວງ,ເປັນວຽກງານທີ່ກວ້າງ, ຫຼາຍໜ້າວຽກ ໃນໜຶ່ງປີຜ່ານມາເຫັນວ່າມີຜົງານ ແລະ ຜົນສຳເລັດຫຼາຍດ້ານ ແລະ ທ່ານຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບຜົນງານໃນໄລຍະຜ່ານມາ ແລະ ພ້ອມກັນສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງຕົນຮັບຜິດຊອບໃຫ້ສຳເລັດຫຼາຍກວ່າເກົ່າ, ສືບຕໍ່ແກ້ໄຂຂໍ້ຄົງຄ້າງບາງບັນຫາໃຫ້ດີກວ່າເກົ່າ ແລະ ໄດ້ເນັ້ນໜັກໃຫ້ເພີ່ມທະວີການສຶກສາອົບຮົມວຽກງານການເມືອງແນວຄິດໃຫ້ພະນັກງານທີ່ສັງກັດໃຫ້ເລິກເຊິ່ງ, ໃຫ້ມີແນວຄິດອຸ່ນອ່ຽງທຸນທ່ຽງ, ປັບປຸງວຽກງານເນື້ອໃນ, ບຸກຄະລາກອນທີ່ເປັນເສນາທິການ ໃຫ້ສອດຄ່ອງກັບໜ້າທີ່ວຽກງານທີ່ຮັບຜິດຊອບ.

**(ນາງ ວັນນີ ແຝງບົວວັນ)**

# ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການ ແລະ ຄະນະເລຂາທິການ ປະຈຳປີ 2023

(ສພຊ) ເພື່ອເປັນການສະຫຼຸບຕີລາຄາຄືນໃນການຈັດຕັ້ງປະຕິບັດວຽກງານໃນໄລຍະ 1 ປີ 2023 ແລະ ກຳນົດທິດທາງແຜນການປະຈຳປີ 2024 ຂອງຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ; ໃນວັນທີ 26 ມັງກອນຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອັດຕະປື, ໄດ້ຈັດກອງປະຊຸມຄົບຄະນະປະຈຳປີ2023ຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຄະນະເລຂາທິການສະພາປະຊາຊົນແຂວງອັດຕະປື ໂດຍການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະປະຈຳ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາປະຊາຊົນແຂວງ ທີ່ເປັນຄະນະກຳມະການ, ຕະຫຼອດຮອດພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.



ກອງປະຊຸມ, ໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຄະນະເລຂາທິການ, ເຊິ່ງຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້, ໂດຍສະເພາະການປະຕິບັດຕາມ 3 ພາລະບົດບາດ ເປັນຕົ້ນ: ດ້ານນິຕິກຳ, ດ້ານການຕົກລົງບັນຫາຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາຂອງບັນດາຄະນະກຳມະການ. ຕິດພັນກັບການປະຕິບັດພາລະບົດບາດຂອງຄະນະເລຂາທິການສະພາປະຊາຊົນແຂວງ ໃນການເປັນເສນາທິການດ້ານການຄົ້ນຄວ້າ-ສັງລວມເນື້ອໃນຮອບດ້ານ, ດ້ານການຄຸ້ມຄອງບໍລິຫານການເງິນ,ວຽກພັກ-ພະນັກງານ ແລະ ສ້າງສິ່ງອຳນວຍຄວາມສະດວກອື່ນໆ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ; ຫຼັງຈາກນັ້ນ, ຜູ້ແທນກອງປະຊຸມໄດ້ແລກປ່ຽນຄຳຄິດຄຳເຫັນກັນຢ່າງມີຈຸດສຸມ ແລະ ກົງໄປກົງມາ ເພື່ອໃຫ້ເນື້ອໃນບົດສະຫຼຸບດັ່ງກ່າວ ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ຮັດກຸມ ຖືກຕ້ອງສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍກຳນົດໄວ້, ຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ວຽກງານໄດ້ຮັບຜົນສຳເລັດ ແລະ ໄດ້ຮັບການປັບປຸງໃຫ້ເຂັ້ມແຂງໄປເທື່ອລະກ້າວ; ພ້ອມນັ້ນ, ກອງປະຊຸມຍັງຈະໄດ້ຮັບຟັງບົດລາຍງານການສະຫຼຸບຖອດຖອນບົດຮຽນ ໃນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອ6 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II; ຮັບຟັງການລາຍງານກ່ຽວກັບແຜນການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II.

ທ່ານ ນາງ ມີນາພອນ ໄຊສົມພູ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ຕີລາຄາສູງຕໍ່ການຈັດຕັ້ງປະຕິບັດວຽກງານຂອງບັນດາຄະນະກຳມະການ ແລະ ຄະນະເລຂາທິການ ພ້ອມທັງສະແດງຄວາມຍ້ອງຍໍຊົມເຊີຍທີ່ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ ເຊິ່ງສາມາດຍາດໄດ້ຜົນສຳເລັດໃນຫຼາຍໆດ້ານ ແລະ ໄດ້ເນັ້ນໃຫ້ບັນດາຄະນະກຳມະການ ແລະ ຄະນະເລຂາທິການ ຈຶ່ງໄດ້ເພີ່ມທະວີສືບຕໍ່ການພົວພັນປະສານງານໃຫ້ກົມກຽວກັນລະຫວ່າງບັນດາຄະນະກຳມະການດ້ວຍກັນ, ຄະນະກຳມະການກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ໃນການແລກປ່ຽນສະໜອງຂໍ້ມູນ, ສຸມໃສ່ຜັນຂະຫຍາຍບັນດານິຕິກຳ, ກົດໝາຍລະບຽບການຕ່າງໆທີ່ໄດ້ຮັບຮອງ ແລະ ວາງອອກໃນໄລຍະຜ່ານມາ, ເພີ່ມທະວີວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ແກ່ສະມາຊິກພັກ-ພະນັກງານຢ່າງຕໍ່ເນື່ອງ, ປັບປຸງແບບແຜນວິທີເຮັດວຽກ, ມີການຕິດຕາມກວດກາ, ມີການປະເມີນຜົນງານ, ສົ່ງເສີມຄວາມເປັນເຈົ້າການແລະມີຫົວຄິດປະດິດສ້າງ, ເອົາໃຈໃສ່ປົກປັກຮັກສາສຳນັກງານ, ຄຸ້ມຄອງພາຫະນະ, ອຸປະກອນຮັບໃຊ້ ແລະ ຊັບສິນສ່ວນລວມ, ຄຸ້ມຄອງການນຳໃຊ້ງົບປະມານໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ສາມາດກວດສອບໄດ້ບົນພື້ນຖານຍຶດໝັ້ນນະໂຍບາຍປະຢັດມັດທະຍັດແຫ່ງຊາດ,ເພື່ອຮັບປະກັນຄຸນນະພາບເຮັດໃຫ້ການເປັນເສນາທິການແກ່ສະພາປະຊາຊົນແຂວງ, ເປັນເສນາທີ່ດີ, ການປະສານງານທີ່ດີ, ບໍລິການຮັບໃຊ້ທີ່ເກັ່ງແລະມີວິໄນພ້ອມທັງເປັນຊ່ຽວຊານ ແລະ ທັນສະໄໝວ່ອງໄວຂຶ້ນເທື່ອລະກ້າວ.

**(ວິນັດ ສີສຸລາດ)**



# ບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນຂອງແຂວງຄຳມ່ວນ

ທ່ານ ນາງ ບົງອອນ ໄຊຍະສິດ ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ໃຫ້ສຳພາດຕໍ່ສື່ມວນຊົນສະພາແຫ່ງຊາດ ເນື່ອງໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ:

**I. ບັນຫາທີ່ພົ້ນເດັ່ນແລະເຄັ່ງຮ້ອນຂອງແຂວງ**

ຜ່ານການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ກໍຄືກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງຄຳມ່ວນ ສາມາດຍົກໃຫ້ເຫັນບັນຫາທີ່ພົ້ນເດັ່ນ ແລະ ເຄັ່ງຮ້ອນພາຍໃນແຂວງຄຳມ່ວນ ດັ່ງນີ້:

**● ການແກ້ໄຂບັນຫາອັດຕາເງິນເຟີ້:**

- ຊຸກຍູ້ ແລະ ຄຸ້ມຄອງການຈັດເກັບລາຍຮັບຢູ່ບັນດາດ່ານຊາຍແດນໃຫ້ດີຫຼາຍຂຶ້ນ; ປັບປຸງການຄຸ້ມຄອງດ່ານໃຫ້ມີຄວາມເປັນເອກະພາບຕາມທິດທັນເປັນທັນສະໄໝ, ໂປ່ງໃສ, ມີຄວາມສະດວກ, ວ່ອງໄວ; ຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນ ທັງແກ້ໄຂປາກົດການຫຍໍ້ທໍ້ຕ່າງຄົນຕ່າງເຮັດ ແລະ ຄຸ້ມຄອງຄົນຕ່າງປະເທດທີ່ເຂົ້າມາດຳລົງຊີວິດ, ດຳເນີນທຸລະກິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

- ເພີ່ມທະວີການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດໃຫ້ຫຼາຍ, ດຳເນີນຂັ້ນຕອນອະນຸມັດໂຄງການໃຫ້ໄວ ຫຼຸດຜ່ອນຂັ້ນຂອດທີ່ບໍ່ຈຳເປັນ; ການນຳເຂົ້າທຶນ ຕ້ອງຜ່ານລະບົບທະນາຄານ ແລະ ແລກປ່ຽນເປັນເງິນກີບ ກ່ອນນຳໄປຈັດຕັ້ງປະຕິບັດ.

- ຄຸ້ມຄອງການເຄື່ອນໄຫວທາງການເງິນຂອງທະນາຄານທຸລະກິດ, ບັນຫາການແລກປ່ຽນເງິນຕານອກລະບົບ (ຖ້າໃຜແລກປ່ຽນຜິດກົດໝາຍກໍມອບໃຫ້ຕຳຫຼວດແກ້ໄຂໂລດ ບໍ່ຕ້ອງຢ້ານກົວ ບໍ່ຕ້ອງຢ້ານ ເສຍອົກເສຍໃຈ ເພາະມີຄຳສັ່ງແລ້ວ ມີແຕ່ຕ້ອງປະຕິບັດ ຜິດກໍວ່າໄປຕາມຜິດ), ຮັບປະກັນບໍ່ໃຫ້ມີການປັ່ນປ່ວນເສດຖະກິດ ແລະ ແກ້ໄຂການແລກປ່ຽນເງິນຕາຜິດກົດໝາຍ ພ້ອມທັງນຳໃຊ້ມາດຕະການຢ່າງເຂັ້ມງວດ, ເດັດຂາດຕໍ່ຜູ້ລະເມີດ ແລະ ກະທຳຜິດກົດໝາຍ, ຕໍ່ຜູ້ສວຍໃຊ້ໜ້າທີ່ຫາຜົນປະໂຫຍດແບບບໍ່ຊອບທຳ ໂດຍບໍ່ມີການຍົກເວັ້ນ.

- ການນຳເຂົ້າ-ສົ່ງອອກ ຕ້ອງຊຳລະຜ່ານລະບົບທະນາຄານ, ຂຶ້ນທະບຽນ ແລະ ຄຸ້ມຄອງຜູ້ນຳເຂົ້າ-ສົ່ງອອກ, ແກ້ໄຂສະພາບໃຜກໍມີສິດນຳເຂົ້າ, ຫຼີກຫຼີ່ການເສຍພາສີແລະອື່ນໆ; ພ້ອມນັ້ນ, ກໍໃຫ້ປັບປຸງແກ້ໄຂຂັ້ນຂອດບໍລິການໃຫ້ສະດວກວ່ອງໄວຂຶ້ນ. ເພີ່ມທະວີສົ່ງເສີມການຜະລິດສິນຄ້າອຸປະໂພກ-ບໍລິໂພກ ເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກຕ່າງປະເທດ ເພື່ອຫຼຸດຜ່ອນການນຳເຂົ້າ ກໍຄື ຫຼຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດ.

- ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ແກ້ໄຂການແລກປ່ຽນເງິນຕາທີ່ບໍ່ຖືກຕ້ອງ ໂດຍການເພີ່ມທະວີຄວາມຮັບຜິດຊອບໃນການເຄື່ອນໄຫວ ກວດກາ ແລະ ດຳເນີນຄະດີຕໍ່ບຸກຄົນ, ນິຕິບຸກຄົນ, ຜູ້ທີ່ຍັງເຄື່ອນໄຫວແລກປ່ຽນເງິນຕາແບບຊະຊາຍ, ສ້າງຄວາມປັ່ນປ່ວນ; ເອົາໃຈໃສ່ຕິດຕາມກຸ່ມເປົ້າໝາຍ ທີ່ມີການນຳໃຊ້ບັນຊີສ່ວນຕົວ ເຂົ້າໃນການແລກປ່ຽນເງິນຕາແບບຜິດກົດໝາຍ, ພ້ອມທັງຕິດຕາມ ຖ້າພົບເຫັນພະນັກງານ ແລະ ເຈົ້າໜ້າທີ່ສວຍໃຊ້ໜ້າທີ່ອຳນວຍຄວາມສະດວກໃນການດຳເນີນການແລກປ່ຽນເງິນແບບຜິດກົດໝາຍ ຕ້ອງໄດ້ດຳເນີນຕາມຂະບວນການຂອງກົດໝາຍຢ່າງເຂັ້ມງວດ; ຕິດຕາມການນຳເງິນສົດເຂົ້າ-ອອກ ສປປ ລາວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ພ້ອມທັງປະຕິບັດມາດຕະການເດັດຂາດຕໍ່ຜູ້ລະເມີດຕາມພາລະບົດບາດຂອງຕົນ ແລະ ໃຫ້ກຳລັງ ປກສ ແລກປ່ຽນ ຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ຢ່າງເປັນປະຈຳ.

**● ການແກ້ໄຂບັນຫາການເໜັງຕີງຂອງລາຄາສິນຄ້າ:**

- ການຄົ້ນຄວ້າ, ກຳນົດໂຄງສ້າງລາຄາສິນຄ້າ ທີ່ຈຳເປັນຕໍ່ການຜະລິດ ແລະ ການດຳລົງຊີວິດໃຫ້ປະກອບມີປັດໄຈອັດຕາແລກປ່ຽນເພື່ອເຮັດໃຫ້ເຫັນຕົ້ນທຶນການຜະລິດ ແລະ ການນຳເຂົ້າທີ່ແທ້ຈິງ ພ້ອມທັງຄຸ້ມຄອງຂອດຈຳໜ່າຍໃຫ້ຮ້ານຕົວແທນ ຫຼື ຮ້ານຄ້າທົ່ວໄປ ໃນລາຄາທີ່ເໝາະສົມ ແລະ ຫ້າມເດັດຂາດບໍ່ໃຫ້ບໍລິສັດຄິດໄລ່ການຂາຍສິນຄ້າໂດຍຖືເອົາອັດຕາແລກປ່ຽນນອກລະບົບມາເປັນພື້ນຖານໃນການຄິດໄລ່ລາຄາຂາຍ ເພື່ອຫຼີກລ້ຽງບໍ່ໃຫ້ລາຄາສິນຄ້າເໜັງຕີງເພີ່ມຂຶ້ນຕື່ມອີກ.



- ເພື່ອເປັນການຮ່ວມມືລະຫວ່າງ ພາກລັດ ແລະ ຜູ້ປະກອບການ ຫຼື ຫົວໜ່ວຍທຸລະກິດທີ່ຕິດພັນກັບສິນຄ້າອຸປະໂພກ-ບໍລິໂພກ ທີ່ຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ຄວນມີການສະໜອງສິນຄ້າໃນລາຄານະໂຍບາຍ ຫຼື ລາຄາແຊກແຊງເພື່ອກຳນົດລາຄາສູງສຸດຫຼຸດຈາກລາຄາຕະຫຼາດທີ່ເຫັນວ່າກະທົບແຮງ ແລະ ຈຳເປັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ພະນັກງານ ທີ່ມີລາຍຮັບຕ່ຳ ໃນນັ້ນ, ແຂວງຄຳມ່ວນກໍໄດ້ຮັບເງິນໂຄງການຄັງແຮເຂົ້າແຊກແຊງ ແລະ ດັດສົມຕະຫຼາດ ແຕ່ຫົວໜ່ວຍທຸລະກິດໂຮງສີເຂົ້າ ບໍ່ສາມາດນຳເຂົ້າອອກມາແຊກແຊງລາຄາ ແລະ ດັດສົມຕະຫຼາດໄດ້ ເນື່ອງຈາກວ່າປັດຈຸບັນ ມີບາງໂຮງສີໄດ້ຢຸດການເຄື່ອນໄຫວແລ້ວແລະກຳລັງຢູ່ໃນຂັ້ນຕອນການພິຈາລະນາຂອງຄະນະສະເພາະກິດ ເພື່ອກ້າວເຂົ້າໄປສູ່ຂະບວນຍຸຕິທຳ.

-ເພື່ອເປັນການຕິດຕາມສະພາບການເໜັງຕີງຂອງລາຄາສິນຄ້າ ແລະ ແຜນການຜະລິດພາຍໃນ ໃຫ້ໄດ້ຂໍ້ມູນຖືກຕ້ອງ, ຊັດເຈນ ທາງພະແນກອຸດສາຫະກຳ ແລະ ການຄ້າ ຈະໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງເກັບກຳຂໍ້ມູນການຜະລິດ, ການສະໜອງ ໄດ້ຕາມຄວາມຕ້ອງການຂອງປະຊາຊົນ ຫຼື ບໍ່ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າຈາກຕ່າງແຂວງ ຫຼື ຕ່າງປະເທດ ທີ່ບໍ່ຈຳເປັນ ພ້ອມທັງສ້າງກົນໄກລາຍງານໃຫ້ວ່ອງໄວ (ນຳໃຊ້ວັອດແອັບ ແລະ ອື່ນໆ) ເພື່ອໃຫ້ທັນກັບສະພາບການທາງດ້ານລາຄາ, ຄົ້ນຄວ້າກົນໄກການຕິດຕາມ ແລະ ກວດກາແຕ່ລະຂອດການນຳເຂົ້າສິນຄ້າ ຈົນຮອດການຈໍລະຈອນພາຍໃນເພື່ອແກ້ໄຂສະພາບການຄ້າຂາຍແບບຊະຊາຍຜ່ານມາ ແລະ ເພື່ອນຳໃຊ້ເຂົ້າໃນການດັດສົມການສະໜອງ ແລະ ຄວາມຕ້ອງການສິນຄ້າໃນແຕ່ລະໄລຍະ ເພື່ອບໍ່ໃຫ້ລາຄາສູງ.

**II. ໃນໄລຍະຜ່ານມາ ສະພາປະຊາຊົນຂັ້ນແຂວງ ໄດ້ຕິດຕາມກວດກາ 2 ວາລະແຫ່ງຊາດ ມີຜົນໄດ້ຮັບ ແລະ ຂໍ້ຫຍຸ້ງຍາກຄື:**

**●ຜົນສຳເລັດໃນການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ ໄດ້ນຳພາຄະນະລົງເຄື່ອນໄຫວຕິດຕາມກວດກາຢູ່ບັນດາພະແນກການ ແລະ ບັນດາເມືອງ ເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ຕິດພັນກັບການຈັດຕັ້ງຜັນຂະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງຄຳມ່ວນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງກາ ການດຳເນີນທຸລະກິດການຂຸດຄົ້ນ ແລະ ປຸງແຕ່ງແຮ່ເຫຼັກໃນໄລຍະເຮັດທົດລອງ, ການຜະລິດກະສິກຳເພື່ອຄ້ຳປະກັນສະບຽງອາຫານ, ທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ, ການສົ່ງເສີມວິສາຫະກິດຂະໜາດນ້ອຍ, ຂະໜາດກາງ. ເຊິ່ງຜ່ານການຕິດຕາມກວດກາ ສາມາດເກັບກຳໄດ້ສະພາບພົ້ນເດັ່ນຂອງການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ດັ່ງນີ້:

**● ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ**

1. ສະພາບເສດຖະກິດການເງິນຂອງແຂວງຄຳມ່ວນເຂົ້າສູ່ສະພາວະປົກກະຕິ, ມີຄວາມເຂັ້ມແຂງ, ມີສະຖຽນລະພາບ ແລະ ຍືນຍົງ: ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດສາມາດລະດົມແຫຼ່ງທຶນພັດທະນາໄດ້ທັງໝົດ 9.084,57 ຕື້ກີບ ກວມເອົາ 23,78% ຂອງ GDP, ເຮັດໃຫ້ເສດຖະກິດມະຫາພາກຂະຫຍາຍຕົວເຖິງ 5,54% ເຖິງບໍ່ບັນລຸຕາມແຜນ ແຕ່ໂດຍລວມເສດຖະກິດມີທ່າອ່ຽງດີຂຶ້ນ ເປັນຕົ້ນ: ຂະແໜງອກະສິກຳ, ຂະແໜງອຸດສາຫະກຳປຸງແຕ່ງ, ການຄ້າລະຫວ່າງປະເທດ ແລະ ການບໍລິການຂົນສົ່ງສິນຄ້າມີທ່າອ່ຽງເພີ່ມຂຶ້ນ.

2. ລະບົບການເງິນມີຄວາມຄ່ອງຕົວ, ການເກັບລາຍຮັບງົບປະມານສາມາດບັນລຸຕາມແຜນການ ເຊິ່ງຕະຫຼອດໄລຍະ 3 ປີຜ່ານ ມາສາມາດຈັດເກັບລາຍຮັບລື່ນແຜນການມາຕະຫຼອດ: ສາມາດຈັດເກັບລາຍຮັບໄດ້ທັງໝົດ 3.694,72 ຕື້ກີບ ເທົ່າກັບ 9,33% ຂອງແຜນ 5 ປີ, ສຳເລັດການຕິດຕັ້ງລະບົບ TaxRis ຢູ່ບັນດາເມືອງ, ການຕິດຕັ້ງລະບົບເກັບເງິນທັນສະໄໝ ແລະ ລວມສູນຢູ່ດ່ານສາກົນ 2 ດ່ານ ແມ່ນສຳເລັດ ແລະ ນຳໃຊ້ຢ່າງເປັນປົກກະຕິ.

3. ການລົງທຶນຂອງລັດ, ເອກະຊົນ ມີປະສິດທິຜົນ, ໜີ້ສິນຫລຸດລົງການຟູມເຟືອຍໄດ້ຮັບການແກ້ໄຂໄດ້ຢ່າງເປັນຮູບປະທຳ: ສຳເລັດການກວດກາໂຄງການ (2019-2023), ໄດ້ປັບປຸງສະພາບແວດລ້ອມ ແລະ ການແກ້ໄຂຄວາມຫຍຸ້ງຍາກຂອງການດຳເນີນທຸລະກິດ ຕາມຄຳສັ່ງເລກທີ02/ນຍ ແລະ 03/ນຍ ເຊິ່ງສາມາດຫຼຸດຂັ້ນຕອນ ແລະ ໄລຍະການເລີ່ມຕົ້ນດຳເນີນທຸລະກິດໄດ້ຫຼາຍສົມຄວນ.

4. ການຜະລິດກະສິກຳ, ອຸດສາຫະກຳ, ການບໍລິການການທ່ອງທ່ຽວ ຂະຫຍາຍຕົວຕໍ່ເນື່ອງມີຄຸນນະພາບ: ການຜະລິດພືດ, ຊີ້ນ, ປາ ແລະ ໄຂ່ ແມ່ນລື່ນແຜນການ ພ້ອມນັ້ນກໍໄດ້ສຸມໃສ່ການຜະລິດຕາມມາດຖານກະສິກຳສະອາດ ແລະ ກະສິກຳອິນຊີ ຕາມເຂດທ່າແຮງທີ່ມີ; ການຂຸດຄົ້ນແຮ່ທາດ ແລະ ຈຳໜ່າຍຜະລິດຕະພັນແຮ່ທາດ ແມ່ນສາມາດປະຕິບັດລື່ນແຜນການ; ວຽກງານທ່ອງທ່ຽວ ແມ່ນໄດ້ສົມທົບກັບຕຳຫຼວດທ່ອງທ່ຽວ ໃນການອະນຸຍາດເອກະສານນຳເຂົ້າ-ສົ່ງອອກ ນັກທ່ອງທ່ຽວ ແລະ ເກັບຄ່າທຳນຽມແບບລະບົບປະຕູດຽວ ພ້ອມນັ້ນກໍໄດ້ສ້າງຕັ້ງສະມາຄົມນັກທຸລະກິດທ່ອງທ່ຽວຂອງແຂວງ.

5. ຍົກສູງການປະຕິບັດລະບຽບກົດໝາຍ ເດັດຂາດໃນການປະຕິບັດວິໄນການເງິນ: ຄະນະນຳແຕ່ລະຂັ້ນໄດ້ເອົາໃຈໃສ່ຕິດຕາມ, ກວດກາແລະປະເມີນຜົນສະມາຊິກພັກ-ພະນັກງານເປັນປົກກະຕິ ແລະ ເດັດຂາດຕໍ່ການລະເມີດວິໄນ ພ້ອມນັ້ນ ກໍໄດ້ຄົ້ນຄວ້າປັບປຸງພາລະບົດບາດ ແລະ ການເຄື່ອນໄຫວວຽກງານຂອງບັນດາພະແນກການ-ອົງການທຽບເທົ່າ ໃນທົ່ວແຂວງ.

● ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄດ້ມີການໂຄສະນາສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນ 10 ເມືອງທົ່ວແຂວງ ໂດຍການເຜີຍແຜ່, ເຊື່ອມຊຶມບັນດານິຕິກຳຂອງພັກ-ລັດ ຜ່ານສື່ມວນຊົນປະເພດຕ່າງໆ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ກໍຄືປະຊາຊົນບັນດາເຜົ່າ ໄດ້ເຂົ້າໃຈເຖິງໂທດແລະຜົນຮ້າຍຂອງຢາເສບຕິດ. ຊຶ່ງຜ່ານການຈັດຕັ້ງປະຕິບັດເຮັດໃຫ້ເຈົ້າໜ້າທີ່ສາມາດກຳແໜ້ນສະພາບການ, ເລ່ຫຼ່ຽມການເຄື່ອນໄຫວ, ກຳແໜ້ນເປົ້າໝາຍ, ກຸ່ມແກ້ງການຂົນສົ່ງ, ຄ້າ-ຂາຍຢາເສບຕິດ ແລະ ສາມາດສະກັດກັ້ນ ແລະ ແກ້ໄຂໄດ້ຢ່າງທັນການ ໃນນີ້:

1. ດ້ານວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ: ໄດ້ເປີດການສຶກສາອົບຮົມເປົ້າໝາຍຢາເສບຕິດຢູ່ບັນດາກຸ່ມບ້ານໃນທົ່ວແຂວງທັງໝົດ ໄດ້ທັງໝົດ 1.380 ຄົນ ຍິງ 30 ຄົນ.

2. ວຽກງານສ້າງ, ສະເໜີປັບປຸງຄຳສັ່ງແນະນຳ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ: ປັບປຸງບົດບັນທຶກກອງປະຊຸມ 4 ພາກສ່ວນຄື: ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດແຂວງ ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ກ່ຽວກັບການແກ້ໄຂ ແລະ ການດຳເນີນຄະດີ, ບັນຫາຢາເສບຕິດ; ບົດບັນທຶກກອງປະຊຸມພົບປະແລກປ່ຽນບົດຮຽນ ໃນການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ 2 ແຂວງ 5 ຕົວເມືອງ (ແຂວງຄຳມ່ວນ-ແຂວງບໍລິຄຳໄຊ) ແລະ 2 ແຂວງ 7 ຕົວເມືອງ (ແຂວງຄຳມ່ວນ-ແຂວງສະຫວັນນະເຂດ) ແລະ ສືບຕໍ່ປັບປຸງນິຕິກຳໃຕ້ກົດໝາຍກ່ຽວກັບບັນຫາກາເຟທີ່ມີສານເສບຕິດແລະນ້ຳໃບກະທ່ອມທີ່ມີສານເສບຕິດທີ່ແຜ່ລະບາດເກີດຂຶ້ນຢູ່ໃນສັງ

ອ່ານຕໍ່ໜ້າ 7

# ສປນວ ສຳເລັດການສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານ-ລັດຖະກອນ

(ສພຊ) ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ສຳເລັດກອງປະຊຸມເຝິກອົບຮົມວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ຂອງ ສປນວ ແລະ ຄະນະຊ່ວຍວຽກຂອງຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງ 9 ເມືອງ ຂອງນະຄອນຫຼວງວຽງຈັນ ໃນວັນທີ 27 ກຸມພາ 2024 ຢູ່ທີ່ສຳນັກງານອົງການປົກຄອງນະຄອນຫຼວງວຽງຈັນ ໂດຍການຜັດປ່ຽນກັນເປັນປະທານຂອງທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານ ສປນວ ແລະທ່ານ ນະຄະເສນ ສີຫາລາດ ເລຂາທິການ ສປນວ, ມີບັນດາທ່ານຮອງເລຂາທິການ, ພະນັກງານ-ລັດຖະກອນ ແລະ ຄະນະຊ່ວຍວຽກຂອງຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ເຂົ້າຮ່ວມ.




ໃນກອງປະຊຸມ, ບັນດາຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບບົດຮຽນໃນການຂຽນ, ຮ່າງເອກະສານທາງລັດຖະການ ແລະ ທັກສະໃນການເວົ້າ, ການປະກອບຄຳເຫັນໃນກອງປະຊຸມ ຈາກທ່ານ ປອ. ນາງ ຈັນທາ ອ່ອນໄຊວຽງ ຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດປົກຄອງ ແລະ ເຝິກອົບຮົມ ກະຊວງພາຍໃນ ເຊິ່ງການເຝິກອົບຮົມຄັ້ງນີ້ແມ່ນເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ແລະ ຄະນະຊ່ວຍວຽກ ເພື່ອຍົກສູງການປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ການນຳຂອງ ສປນວ ແລະ ຄະນະສະມາຊິກສະພາປະຊາຊົນ ປະຈຳເຂດເລືອກຕັ້ງເມືອງ; ບົດຮຽນທີ່ນຳມາເຝິກອົບຮົມຄັ້ງນີ້ແມ່ນເປັນຄວາມຮູ້ພື້ນຖານໃຫ້ແກ່ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃຫ້ສາມາດນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານໃນຕໍ່ໜ້າໃຫ້ມີຄວາມເຂັ້ມແຂງ ເພື່ອເປັນສ່ວນສຳຄັນໃນການເຊີດຊູບົດບາດຂອງສປນວ ໃຫ້ນັບມື້ສູງຂຶ້ນ ແລະ ທັງເປັນພື້ນຖານນຳໃຊ້ເຂົ້າໃນຂອບເຂດວຽກງານຂອງແຕ່ລະຂະແໜງການທີ່ເປັນເສນາທິການໃຫ້ດີຂຶ້ນເປັນກ້າວໆ.

**(ນັກຂ່າວ ສປນວ)**

# ສສຊ ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງນ້ຳບາກ ແຂວງຫຼວງພະບາງ

(ສພຊ) ໃນລະຫວ່າງວັນທີ 20-22 ກຸມພາ 2024, ທ່ານ ນາງ ວຽນວິໄລ ດີລະພັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ໄດ້ເຄື່ອນໄຫວພົບປະໂອ້ລົມຜູ້ມີສິດເລືອກຕັ້ງ ເພື່ອຜັນຂະຫຍາຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະສະພາປະຊາຊົນແຂວງ ຊຸດທີ II ຢູ່ເມືອງນ້ຳບາກ ເຊິ່ງໄດ້ເຄື່ອນໄຫວຢູ່ 5 ບ້ານ ຄື: ດອນຄຳ, ປຸງຈອງ, ນາຍາງໃຕ້, ໂພນສະຫວັນ ແລະ ໂພນມະນີ ເຂົ້າຮ່ວມຮັບຟັງມີຄະນະບໍລິຫານງານພັກເມືອງ, ການຈັດຕັ້ງບ້ານ ແລະ ປະຊາຊົນພາຍໃນບ້ານ ເຂົ້າຮ່ວມທັງໝົດ 313 ຄົນ ຍິງ 116 ຄົນ.

ທັງນີ້ ກໍເພື່ອເຜີຍແຜ່ບັນດາມະຕິ ທີ່ໄດ້ພິຈາລະນາ ແລະ ຮັບຮອງຢູ່ກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃຫ້ຜູ້ມີສິດເລືອກຕັ້ງຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງກັນ, ພ້ອມທັງເປັນການຫັນລົງຮາກຖານ, ພົບປະໂອ້ລົມຜູ້ມີສິດເລືອກຕັ້ງ ໃນການຮັບຟັງຄຳຄິດຄຳເຫັນ ແລະ ຄຳສະເໜີທີ່ມີຕໍ່ພາກລັດ ເພື່ອຊີ້ແຈງຄຳສະເໜີຂອງປະຊາຊົນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ, ແກ້ໄຂ ໃຫ້ຖືກຕ້ອງຕາມກົດໝາຍ.

ໃນຕອນທ້າຍ, ທ່ານ ນາງ ວຽນວິໄລ ດີລະພັນ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດສອງວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ເປັນຕົ້ນແມ່ນຂະແໜງສຶກສາທິການ ແລະ ກິລາ, ຂະແໜງສາທາລະນະສຸກທີ່ແຂວງຫຼວງພະບາງໄດ້ວາງອອກ ໃຫ້ສູ້ຊົນເພື່ອໃຫ້ບັນລຸຕາມແຕ່ລະຄາດໝາຍທີ່ວາງໄວ້.

**(ນາງ ຄຳຫຼ້າ ສະວະນຸດ)**



## ບັນຫາ...

(ຕໍ່ຈາກໜ້າ 6)

ຄົມ ພາຍໃນແຂວງຄຳມ່ວນ.

3. ວຽກງານປັບປຸງກົງຈັກການຈັດຕັ້ງແລະຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງອົງການສືບສວນ-ສອບສວນ ແລະ ພາກສ່ວນທີ່ກ່ຽວຂ້ອງຕໍ່ການແກ້ໄຂບັນຫາຢາເສບຕິດ: ປັບປຸງພື້ນຖານໂຄງລ່າງ, ບຸຄະລາກອນ ແລະ ຢາປິ່ນປົວໃຫ້ແກ່ສູນບຳບັດປິ່ນປົວ ແລະ ຝຶກວິຊາຊີບໃຫ້ຜູ່ຕິດຢາເສບຕິດ ໂດຍມອບໝາຍໃຫ້ພະແນກສາທາລະນະສຸກແຂວງ, ກອງບັນຊາການ ປກສ ແຂວງ ເປັນຜູ້ຈັດຕັ້ງປະຕິບັດ; ປະກອບພາຫະນະ, ວັດຖຸອຸປະກອນອັນຈຳເປັນໃຫ້ແກ່ວຽກງານສືບຂ່າວ, ວຽກງານສືບສວນ-ສອບສວນ, ວຽກງານຄວບຄຸມສານເຄມີ, ວຽກງານສຳຫຼວດ, ວຽກງານເກັບກຳຂໍ້ມູນສະຖິຕິການລົງທຳລາຍເນື້ອທີ່ປູກພືດທີ່ມີສານເສບຕິດ ແລະ ວຽກງານອື່ນໆທີ່ຈຳເປັນໂດຍມອບໃຫ້ຄະນະພັກແຕ່ລະຂັ້ນເປັນຜູ່ຄົ້ນຄວ້າຕົກລົງມອບໃຫ້ນຳໃຊ້.

4. ວຽກງານຍົກສູງປະສິດທິພາບການຄຸ້ມຄອງ, ຊີ້ນຳໃນການຈັດຕັ້ງປະຕິບັດຮອບດ້ານໃນວຽກງານແກ້ໄຂບັນຫາຢາເສບຕິດ: ແຕ່ລະພາກສ່ວນໄດ້ເປັນເຈົ້າການໃນການນຳເອົາວາລະດັ່ງກ່າວນຳໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ລວມທັງປະຊາຊົນບັນດາເຜົ່າ, ພາກສ່ວນນັກທຸລະກິດ, ເອກະຊົນກໍໄດ້ໃຫ້ການຊ່ວຍເຫຼືອ, ຮ່ວມມື, ສະໜັບສະໜູນ, ມີຄວາມຕື່ນຕົວເຂົ້າຮ່ວມ ແລະ ລາຍງານປະສານສົມທົບຢ່າງກົມກຽວ.

**●ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດ**

ຄຽງຄູ່ກັບດ້ານຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ໃນການຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃນໄລຍະຜ່ານມາ ເຫັນວ່າມີຂໍ້ຫຍຸ້ງຍາກ ແລະ ຄົງຄ້າງ ດັ່ງນີ້:

- ການຄົ້ນຄວ້າສ້າງແຜນການເຄື່ອນໄຫວຕິດຕາມກວດກາຈຳນວນໜຶ່ງ ມີລັກສະນະຮີບດ່ວນ ເຮັດໃຫ້ການກຳນົດເນື້ອໃນ, ການກຳນົດເປົ້າໝາຍ, ການຄົ້ນຄວ້າດ້ານກົດໝາຍ, ນິຕິກຳທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການວິເຄາະວິໄຈບັນຫາ ໃນການຕິດຕາມກວດກາ, ການໃຫ້ຄຳແນະນຳວິທີການແກ້ໄຂບັນຫາແກ່ພາກສ່ວນກ່ຽວຂ້ອງບໍ່ທັນເລິກເຊິ່ງ;

- ການລົງຕິດຕາມກວດກາຂອງກົງຈັກສະພາປະຊາຊົນຂັ້ນແຂວງ ແມ່ນຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເຖິງແມ່ນວ່າມີແຜນການແລ້ວກໍຕາມ ແຕ່ຍ້ອນງົບປະມານ ແລະ ເວລາຈຳກັດ;

- ການເຮັດໜ້າທີ່ຄຸ້ມຄອງມະຫາພາກ ຂອງບັນດາຄະນະກຳມະການດ້ວຍການກຳນົດເນື້ອໃນຕິດຕາມກວດກາ, ການເຈາະຈີ້ມຕໍ່ບັນຫາຕ່າງໆ ເພື່ອມອບໃຫ້ສະມາຊິກສະພາປະຊາຊົນແຂວງເປັນຜູ້ຈັດຕັ້ງປະຕິບັດການຕິດຕາມກວດກາຢູ່ເຂດເລືອກຕັ້ງຂອງຕົນ ແລະ ສົ່ງຂໍ້ມູນໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງ ເຫັນວ່າຍັງເຮັດໄດ້ໜ້ອຍ.

**III. ທິດທາງຈຸມສຸມ ແລະ ວິທີການແກ້ໄຂ ຕໍ່ບັນຫາທີ່ເກີດຂຶ້ນ**

● ວິທີການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ

1. ສ້າງຄວາມເຂັ້ມແຂງທາງດ້ານການຈັດເກັບລາຍຮັບງົບປະມານໂດຍຫັນເປັນທັນສະໄໝດິຈິຕອນ ເພື່ອຮັບປະກັນການຈັດເກັບລາຍຮັບຄົບຖ້ວນ, ສະກັດກັ້ນການຮົ່ວໄຫຼ ໄປພ້ອມກັບການຂະຫຍາຍຖານລາຍຮັບໃໝ່ທີ່ມີທ່າແຮງ.

2. ທຸກພາກສ່ວນພະແນກການ ແລະ ອົງການຈັດຕັ້ງຕ້ອງໃຫ້ການຮ່ວມມືໃນການຂຸດຄົ້ນລາຍຮັບ ແລະ ເອົາໃຈໃສ່ປະຕິບັດ ດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸ່ມເຟືອຍ ຢ່າງເຂັ້ມງວດ.

3. ເພີ່ມທະວີໃນການປະຕິບັດລະບອບເຮັດວຽກຮ່ວມກັນຂອງພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາຂໍ້ຄົງຄ້າງໃນການຈັດເກັບລາຍຮັບເຂົ້າງົບປະມານ ແລະຄຸ້ມຄອງລາຍຈ່າຍຢ່າງເຂັ້ມງວດ ພ້ອມນັ້ນກໍເລັ່ງທວງໜີ້ຄ້າງມອບຄ່າສຳປະທານຊັບສິນຂອງລັດ.

4. ໂຄສະນາພ້ອມທັງສ້າງທ່າແຮງແລະອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນ ຫຼື ຜູ້ປະກອບການທັນເຂົ້າມາລົງທຶນຊຸກຍູ້ໃຫ້ມີການລົງທຶນຜະລິດບັນດາປັດໄຈຕ່າງໆ ເພື່ອຊ່ວຍຫຼຸດຜ່ອນການນຳເຂົ້າປັດໄຈການຜະລິດ. ນອກນັ້ນ, ກໍສົ່ງເສີມຊາວກະສິກອນຫັນມາຜະລິດເອງ ແລະ ນຳໃຊ້ຜະລິດຕະພັນໃຫ້ຫຼາຍຂຶ້ນ.

5. ເພີ່ມທະວີໃນການສົ່ງເສີມໃຫ້ພາກລັດ, ຜູ້ປະກອບການ ແລະ ພໍ່ແມ່ປະຊາຊົນ ໃນການສົ່ງເສີມ ແລະ ນຳໃຊ້ຜະລິດຕະພັນພາຍໃນແຂວງ ເພື່ອຫັດໃຫ້ທຸກພາກສ່ວນມີແນວຄິດປະຢັດ, ຊົມໃຊ້ຜະລິດຕະພັນພາຍໃນ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າຈາກຕ່າງປະເທດ.

**●ວິທີການແກ້ໄຂບັນຫາຢາເສບຕິດ**

1. ສ້າງສະຕິ ແລະ ລະດົມທຸກພາກສ່ວນເຂົ້າຮ່ວມ ໃນວຽກງານຕ້ານ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃຫ້ຫຼາຍຂຶ້ນ, ຫັນກຳລັງລົງກໍ່ສ້າງຮາກຖານຢ່າງເປັນຂະບວນ, ຄົບຊຸດ ພ້ອມທັງເພີ່ມທະວີໃນການຂຶ້ນບັນຊີເປົ້າໝາຍຜະລິດ, ຄ້າຂາຍ, ຂົນສົ່ງ ຫຼື ມີໄວ້ໃນຄອບຄອງ ໃຫ້ມີຄວາມຊັດເຈນ, ຖືກກັບເປົ້າໝາຍຕົວຈິງ ຈົນນຳໄປສູ່ການແກ້ໄຂເປົ້າໝາຍໃຫ້ໝົດໄປ.

2. ເພີ່ມທະວີໃນການໂຄສະນາໃນທົ່ວສັງຄົມ ໃຫ້ຮັບຮູ້ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ.

ທ່ານຮອງປະທານສະພາປະຊາຊົນແຂວງ ຍັງໄດ້ມີຄຳເຫັນຝາກເຖິງພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນແຂວງຄຳມ່ວນ ກໍຄືປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດຕ້ອງມີສະຕິຕື່ນຕົວໃນການຈັດຕັ້ງປະຕິບັດນະໂຍບາຍການປະຢັດມັດທະຢັດ ດ້ວຍຄວາມຮັບຜິດຊອບສູງ, ສ້າງຄວາມເປັນເຈົ້າຕົນເອງ, ກຸ້ມຕົນເອງ ແລະ ຍົກສູງນ້ຳໃຈຮັກຊາດໃຫ້ສູງຂຶ້ນ ໃນສະພາບທີ່ເສດຖະກິດ-ການເງິນ ມີຄວາມຫຍຸ້ງຍາກຄືປັດຈຸບັນ; ເພີ່ມທະວີຄວາມເປັນເຈົ້າການໃນການປະກອບສ່ວນຈັດຕັ້ງປະຕິບັດວາລະແຫ່ງຊາດ ໃນການແກ້ໄຂບັນຫາເສດຖະກິດ-ການເງິນ ເປັນຕົ້ນ: ສຸມໃສ່ການຜະລິດພາຍໃນໃຫ້ຫຼາຍຂຶ້ນໃຫ້ສາມາດກຸ້ມຕົນເອງໄດ້ ແລະ ກາຍເປັນສິນຄ້າເພື່ອສົ່ງອອກ, ສ້າງລາຍຮັບເຂົ້າສູ່ປະເທດເຮົາ, ເວົ້າສະເພາະກໍແມ່ນສາມາດແກ້ໄຂບັນຫາຊີວິດການເປັນຢູ່ຂອງປະຊາຊົນລາວເຮົາໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກເປັນກ້າວໆ ດ້ວຍການຊົມໃຊ້ຜະລິດຕະພັນພາຍໃນຂອງແຂວງກໍຄືຂອງປະເທດເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າ ດ້ານອຸປະໂພກ ແລະ ບໍລິໂພກໃນຕໍ່ໜ້າ; ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລະບຽບການ ແລະ ກົດໝາຍ ເພື່ອຍົກສູງສະຕິການເຄົາລົບກົດໝາຍໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ແກ້ໄຂບັນຫາປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທົ່ວສັງຄົມປະກອບສ່ວນໃນການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍໃຫ້ມີຄວາມສັກສິດເພີ່ມຂຶ້ນເປັນກ້າວໆ.




# ນາງທຽມ ນາງແທ້

# ດັ້ນກົບເມກ

ຟັງແຕ່ຊື່ກໍໜ້າຄິດແລ້ວວ່າບົດບາດນາງທຽມເປັນແນວໃດ ? ຜູ້ຂຽນເຂົ້າໃຈວ່າ: ບົດບາດນາງທຽມແຕ່ກ່ອນກັບປັດຈຸບັນຕ່າງກັນປານຟ້າກັບດິນ; ແຕ່ກ່ອນນາງທຽມມີບົດບາດຍາມຈຳເປັນຕາມຮີດຄອງ ຫຼື ມີວຽກລວມບ້ານປີໜຶ່ງລິງທຽມສອງສາມຄັ້ງພາຍໃນເຂດໝູ່ບ້ານຕ່າງໆ ຕາມຄະຕິຄວາມເຊື່ອຂອງຄົນລາວມາດົນນານ ແຕ່ນາງທຽມປັດຈຸບັນນີ້ມີຢູ່ຫຼາຍບ່ອນອີງແອບກັບຜົນປະໂຫຍດບ່ອນໃດນາງທຽມເຂົ້າໃຈຈິດຕະສາດຄົນເກັ່ງ-ເຂົ້າໃຈແຕ່ງຜີທີ່ກໍາເຮັດໃຫ້ເບິ່ງສັກສິດເຂັ້ມຂັງ ຜູ້ຄົນຍິ່ງຫຼັ່ງໄຫຼໄປຫາ.

ເລື່ອງນາງທຽມທີ່ສ້າງຄວາມທຽມລໍ້ລວງຫາຜົນປະໂຫຍດ ເຂົ້າຖິງບາງແຫ່ງມີໜ້າມ້າຂາສະເລີຍ ຄອຍດຶງຊັກນໍາຄົນເຂົ້າມາ ເຮັດເປັນທີມງານຂະບວນການ ເພາະແບ່ງປະໂຫຍດກັນ, ຜູ້ຂຽນໄດ້ຍິນທາງສຽງສັງຄົມຈົ່ມໃສ່ຫູວ່າ: ປັດຈຸບັນນີ້ປາກົດມີນາງທຽມເພີ່ມຫຼາຍຂຶ້ນບາງບ່ອນນຸ່ງຂາວ-ຫົ່ມຂາວ ທຳທ່າຖືສິນກິນເຈ ຝ່າຍຜູ້ສະແຫວງໂຊກ ຢາກດູດວງດູຊາຕາ ມີໂຊກລາບກໍມີຈິດໃຈຫວັ່ນໄຫວ (ປ່ອຍໃຈ) ຢູ່ແລ້ວ ເມື່ອມາພົບ ນາງທຽມທຳທ່າຄືເວົ້າຄ່ອງເວົ້າຄືຮັບແກ້ດວງເສີມດວງເສີມໂຊກ ຈິດໃຈຊື່ນບານຂຶ້ນມາ ທາງສຽງຍັງເວົ້າຕື່ມວ່າ: ສຳຄັນກໍແມ່ນ ບາງຄົນຜູ້ມີບົດບາດໃນສັງຄົມນັ້ນແຫຼະເຂົ້າໄປຫານາງທຽມ ຄວາມໜ້າເຊື່ອຖືຍິ່ງເພີ່ມຂຶ້ນ ເຊິ່ງໄດ້ຂໍ້ຄິດວ່າ: ສັງຄົມລາວມີທ່າອ່ຽງຊັກນໍາໃຫ້ຄົນຫັນເຫໄປເພິ່ງດວງ-ເພິ່ງໂຊກຊາຕາ, ເສີມດວງໂດຍບໍ່ຄິດໃຊ້ປັນຍາແກ້ໄຂບັນຫາ, ລືງມືປະຕິບັດຕາມໜ້າທີ່ ຢ່າລືມວ່າພວກຫາກິນແບບທຽມໆ ຫຼື ນາງທຽມ ຫຼື ອາໄສດຶງຄົນໃຫ້ເຊື່ອໂຊກລາງແກ້ດວງເສີມດວງໃນຍາມເສດຖະກິດຝືດນັ້ນ ຫາກວ່າເຂົ້າໜ້າບ້ານບໍ່ໄດ້ ເຂົາກໍເຂົ້າປະຕູຫຼັງບ້ານ ເຊິ່ງຜູ້ຂຽນເຄີຍເຫັນມາແລ້ວ ເມື່ອຝ່າຍໜ້າບ້ານມີບົດບາດເຊັ່ນອະນຸມັດ ກໍຈະມີຝ່າຍໄດ້ປະໂຫຍດເພາະຝ່າຍຫຼັງບ້ານຊີ້ນໍາຢູ່ເບື້ອງຫຼັງ.

ສັງລວມວ່າ: ນາງທຽມ ນາງແທ້ ຕ້ອງມີສະຕິປັນຍາອັນໃດ ເປັນການເຊື່ອມີເຫດຜົນບໍ່ງົມງວາຍ ແລະ ອັນໃດມີຜົນປະໂຫຍດແອບແຝງ ບໍ່ແມ່ນແລ່ນຕາມກົ້ນກັນໄປແບບບໍ່ໄດ້ຄິດໄຕ່ຕອງໃຫ້ຮອບຄອບ ພວກ 18 ມຸງກຸດເຂົາເກັ່ງເລື່ອງອຳພາງຢູ່ແລ້ວ.

ສະເໜີແລກປ່ຽນ.




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ເປັນແນວນັ້ນຊັ້ນສູງ ຊັ້ນລຸ່ມກໍເລີຍຫ່າງເຫີນໄກຈາກຊັ້ນລຸ່ມ, ປະຊາຊົນ ແລະ ພັກກໍຫ່າງໄກຈາກກັນ. ຊັ້ນສູງຊໍ້າພັດນຶກວ່າອັນໃດກໍຈົບດີໝົດ. ຊັ້ນຕໍ່າ ເມື່ອມີຫຍັງກໍກ້າເວົ້າອອກ. ເຫັນວ່າເຂົາເຈົ້າບໍ່ເວົ້າ ກໍບໍ່ໝາຍຄວາມວ່າເຂົາເຈົ້າບໍ່ມີຄວາມເວົ້າ, ມັນແມ່ນເປັນຍ້ອນເຂົາເຈົ້າເຫັນວ່າເວົ້າອອກ ຊັ້ນສູງກໍບໍ່ຟັງ, ບໍ່ພິຈາລະນາໃຫ້, ລາງເທື່ອຍັງຊໍ້າພັດປາບອີກດ້ວຍ. ເມື່ອເຂົ້າເຈົ້າບໍ່ກ້າເວົ້າອອກເຂົາກໍເອົາບົ່ມໄວ້ໃນໃຈ ແລ້ວນານໄປກໍເກີດອຸກອັ່ງເບື່ອໜ່າຍ ແລ້ວກໍເກີດມີນິດໄສບໍ່ເວົ້າຕໍ່ໜ້າແຕ່ໄປເວົ້າລັບຫຼັງ, ພາຍໃນພັກມິດບໍ່ມີສຽງແຕ່ອອກໄປນອກຊໍ້າພັດມີປາກສຽງຫຼາຍ ແລ້ວກໍເກີດມີນິດໄສກະຊຸບກະຊິບ ແລະ ມີນິດໄສອັນບໍ່ດີແນວອື່ນອີກ.

ຕາມບົດຮຽນກໍຄື: ໃນສຳນັກງານໃດ ເວລາເປີດປະຊຸມ ຜູ້ໃດມີຫຍັງຊັ້ນສູງກໍປ່ອຍໃຫ້ເວົ້າອອກໝົດ, ອັນຖືກກໍຟັງເອົາ, ອັນບໍ່ຖືກກໍຊີ້ແຈງແກ້ໄຂ, ດັ່ງນັ້ນ ສຳນັກງານນັ້ນ ທຸກຄົນລ້ວນແຕ່ຊື່ນບານ ພະຍາດກະຊຸບກະຊິບກໍໝົດໄປ. ຜູ້ຄົນໃດສະໝອງຍັງອຸກອັ່ງ ແລະ ມີຄວາມຄຽດແຄ້ນເສຍໃຈຢູ່ນັ້ນ ຈະເອົາເຫດເອົາຜົນອັນຖືກປານໃດໄປເວົ້າກໍຍາກທີ່ຈະລອດເຂົ້າໄປເຖິງໃນສະໝອງນັ້ນໄດ້. ຕ້ອງປ່ອຍໃຫ້ເຂົາເຈົ້າຖອດເອົາອຸກອັ່ງ ແລະ ຄວາມຄຽດແຄ້ນເສຍໃຈນັ້ນອອກເສຍແລ້ວ ຄວາມເວົ້າ ຫຼືເຫດຜົນອັນຖືກນັ້ນ ຈຶ່ງຈະລອດເຂົ້າໄປໃນສະໝອງຂອງເຂົາເຈົ້າໄດ້, ນັ້ນແມ່ນເລື່ອງຫຼັກການອັນງ່າຍໆທີ່ສຸດ, ຊັ້ນເທິງກໍຄວາມໝັ່ນຖາມຄຳເຫັນຂອງຊັ້ນລຸ່ມເລື້ອຍໆ, ເຮັດໄດ້ແນວນັ້ນ ແມ່ນບໍ່ຕ່າງຫຍັງກັບຄົນຜູ້ມີຂີ້ໝິ້ນໝໍ້ຕິດໜ້າ, ຜູ້ອື່ນເອົາກະຈົກມາໃຫ້ແຍງ, ພາໃຫ້ຕົນເອງເຫັນຮອຍໜ້າຂອງຕົນ. ພວກເຮົາຕ້ອງຮູ້ຈັກວິທີຕຳໜິກັນໃຫ້ສະຫຼາດສະຫຼຽວຄ່ອງແຄ້ວ ຄືດຽວກັນກັບເອົາກະຈົກໄປແຍງໃຫ້ທຸກຄົນເຫັນຂໍ້ບົກພ່ອງຂອງຕົນຈົນໃຫ້ຕົນເອງໃຜມັນແກ້ໄຂດັດແປງເອົາເອງໄດ້.

ອ່ານຕໍ່ສະບັບໜ້າ...




# ເປີງ - ປາງ - ສະໄໝ

ເປີງ', 'ປາງ' ແລະ 'ສະໄໝ' ເປັນຄຳພ້ອມຄວາມໝາຍ ແຕ່ຕ່າງກັນຢູ່ບ່ອນວ່າ 'ເປີງ' ກັບ 'ປາງ' ເປັນຄຳລາວເດີມ, ສ່ວນ 'ສະໄໝ' ເປັນຄຳເຄົ້າປາລີ. ທັງສາມຄຳນີ້ມີການໃຊ້ຄື ແລະ ຕ່າງກັນດັ່ງນີ້:

'ເປີງ' ເປັນຄຳນາມ ໝາຍເຖິງ "ເວລາ, ສະໄໝ, ຄາວ, ປາງ" ເຊັ່ນ

- ລົດຖີບຄັນນີ້ ພໍ່ຕູ້ຊື້ແຕ່ເປີງເສິກກອງແລ.
- ສຸລາເມໄລ ຕິດພັນໃນປະເພນີວັດທະນະທຳມາແຕ່ເປີງບູຮານ.
- ໃນນິທານເລື່ອງ ປູ່ເຍີ ມີຕອນໜຶ່ງເລົ່າວ່າ: ມວນມະນຸດໃນເປີງນີ້ເປືອຍເອີກເປືອຍອາງເຕັມແຕ່ຂົນບໍ່ຮູ້ເຮັດແນວໃດ ມີແຕ່ນອນດິນກິນຫຍ້າ ພາຊີວິດຂອງຕົນດຳລົງໄປຄືເຊັ່ນນັ້ນເລື້ອຍມາ...

'ປາງ' ເປັນຄຳນາມ ໝາຍເຖິງ "ເວລາ, ສະໄໝ, ຄາວ, ເປີງ" ເຊັ່ນ

- ນີ້ແມ່ນຕຳນານມາແຕ່ບູຮານນະການປາງຂຸນບູລົມ.
- ທາດດຳສ້າງມາແຕ່ປີປາງໃດແທ້ນັ້ນ ຍັງບໍ່ຮູ້ຊັດເຈນ.
- ມີບາງເອກະສານເວົ້າວ່າ ທາດດຳສ້າງຂຶ້ນປາງກອງທັບພະມ້າເຂົ້າມາຕີວຽງຈັນ.

'ສະໄໝ' ເປັນຄຳນາມຈາກເຄົ້າປາລີ Samaya (ສະມະຍະ) ແລ້ວແປງເປັນຄຳລາວວ່າ 'ສະໄໝ' ໝາຍເຖິງ "ເວລາ, ປາງ, ຄາວ, ຍາມ" ເຊັ່ນ

- ໜັງສືພື້ນວຽງ ແຕ່ງຂຶ້ນໃນສະໄໝເຈົ້າອະນຸ.
- ຕຶກເກົ່າຫຼັງນີ້ ສ້າງມາແຕ່ສະໄໝຝຣັ່ງເຂົ້າມາປົກຄອງລາວ.
- ຮູບພາບທີ່ນຳເອົາມາວາງສະແດງເທື່ອນີ້ແມ່ນຮູບພາບພາລະກິດການເຄື່ອນໄຫວປະຕິວັດສະໄໝຕໍ່ສູ້ກູ້ຊາດ.

**# ຂໍ້ສັງເກດ:** ຄຳວ່າ 'ເປີງ' ແລະ 'ປາງ' ມັກໃຊ້ໃນການປາກເວົ້າ ແລະ ທາງດ້ານວັນນະຄະດີ ເປັນຕົ້ນແມ່ນ ພື້ນສືບ, ນິທານ ແລະ ບົດກາບກອນ. ສ່ວນ 'ສະໄໝ' ໃຊ້ທັງໃນການປາກເວົ້າ, ວັນນະຄະດີ ແລະ ໃຊ້ຢ່າງເປັນທາງການໃນເອກະສານການເມືອງ, ປະຫວັດສາດ ແລະ ອື່ນໆ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
| --- | --- |
| ຂັດແຍ້ງ | ຂັດແຍ່ງ |
| ຍາດແຍ່ງ | ຍາດແຍ້ງ |
| ເພີ່ມພູນ | ເພີ້ມພູນ |
| ເລີ່ມຕົ້ນ | ເລີ້ມຕົ້ນ |
| ເລື່ອງສັ້ນ | ເລື້ອງສັ້ນ |
| ຊ່ຽວຊານ | ຊ້ຽວຊານ |
| ລ່າເນື້ອ | ລ້າເນື້ອ |
| ຫຼີກລ່ຽງ | ຫຼີກລ້ຽງ |

ລັດຖະສະພາຕ່າງປະເທດ

# ປາປົວນິວກີເນ ໃຫ້ສັດຕະຍາບັນ
## ການຮ່ວມມືດ້ານປ້ອງກັນຊາດກັບອິນໂດເນເຊຍ



*ຫຼັງຈາກຜ່ານໄປເກືອບ 14 ປີ, ໃນທີ່ສຸດ ສະພາແຫ່ງຊາດຂອງປາປົວນິວກີເນ ໄດ້ໃຫ້ສັດຕະຍາບັນຕໍ່ຂໍ້ຕົກລົງການຮ່ວມມືດ້ານປ້ອງກັນຊາດກັບອິນໂດເນເຊຍ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງ ປອກໂມແຣສະບີ (Port Moresby), ປະເທດປາປົວນິວກີເນເມື່ອວັນທີ 29 ກຸມພາຜ່ານມາວ່າ: ສະພາແຫ່ງຊາດປາປົວນິວກີເນ ໄດ້ມີມະຕິໃຫ້ສັດຕະຍາບັນຕໍ່ຂໍ້ຕົກລົງການຮ່ວມມືດ້ານປ້ອງກັນປະເທດກັບອິນໂດເນເຊຍເພື່ອແບ່ງປັນຂໍ້ມູນຂ່າວລັບທາງການທະຫານ, ໃຫ້ການສະໜັບສະໜູນດ້ານການສິ່ງກຳລັງບຳລຸງທາງທະຫານ (logistical) ແລະ ການປະສານງານການປະຕິບັດງານດ້ານຄວາມໝັ້ນຄົງ.

ສອງປະເທດໄດ້ລົງນາມຮ່ວມກັນໃນຂໍ້ຕົກລົງດັ່ງກ່າວເມື່ອປີ 2010 ແລະ ສະພາຜູ້ແທນປະຊາຊົນອິນໂດເນເຊຍໄດ້ໃຫ້ສັດຕະຍາບັນກ່ອນໃນສອງສາມປີຕໍ່ມາ, ແຕ່ສະພາແຫ່ງຊາດປາປົວນິວກີເນ ຫາກໍໃຫ້ສັດຕະຍາບັນເມື່ອວັນທີ 14 ກຸມພາຜ່ານມາ, ໂດຍລັດຖະບານໄດ້ບັງຄັບໃຊ້ຢ່າງເປັນທາງການໃນໜຶ່ງອາທິດຕໍ່ມາ.

ກະຊວງການຕ່າງປະເທດປາປົວນິວກີເນ ໄດ້ອອກຖະແຫຼງການກ່ຽວກັບເລື່ອງນີ້ວ່າ ດ້ວຍຊາຍແດນຕິດກັບອິນໂດເນເຊຍທີ່ຍາວເກືອບ 800 ກິໂລແມັດ, ປາປົວນິວກີນເນ ຫວັງຢ່າງຍິ່ງວ່າການມີຜົນຂອງຂໍ້ຕົກລົງສະບັບນີ້ ຈະຊ່ວຍຍົກລະດັບທ່າແຮງທາງດ້ານຄວາມໝັ້ນຄົງຂອງປະເທດໃຫ້ສູງຂຶ້ນບໍ່ຫຼາຍກໍໜ້ອຍເນື່ອງຈາກຄວາມໝັ້ນຄົງແມ່ນພື້ນຖານອັນສຳຄັນຂອງການຄ້າ, ການລົງທຶນ ແລະ ທຸລະກິດ.

# ລັດຖະສະພາເອີຣົບ ອະນຸມັດກົດໝາຍຫ້າມໃຊ້ເງິນທຶນຕ່າງປະເທດໂຄສະນາທາງການເມືອງ

*ບັນດາສະມາຊິກສະພານິຕິບັນຍັດສະຫະພາບເອີຣົບ ຮັບຮອງກົດໝາຍໃໝ່ກ່ຽວກັບການໂຄສະນາທາງການເມືອງ ເພື່ອສົ່ງເສີມການຄຸ້ມຄອງການແຊກແຊງຈາກຕ່າງປະເທດ ໃນການເລືອກຕັ້ງລັດຖະສະພາເອີຣົບ ຫຼື ອີພີ (EP) ທີ່ຈະມີຂຶ້ນໃນເດືອນມິຖຸນານີ້.*

ສຳນັກຂ່າວ AFP ລາຍງານຈາກເມືອງສະຕຣາສະບວກ (Strasbourg), ປະເທດຝຣັ່ງ ເມື່ອວັນທີ 28 ກຸມພາຜ່ານມາວ່າ: ສະຫະພາບເອີຣົບ (ອີຢູ) ເຊື່ອວ່າກົດໝາຍດັ່ງກ່າວຈະເຮັດໃຫ້ປະຊາຊົນຈື່ຈຳໂຄສະນາທາງການເມືອງໄດ້ງ່າຍຂຶ້ນ, ຮູ້ວ່າໃຜເປັນຜູ້ສ້າງໂຄສະນາ ແລະ ສາມາດລະບຸໄດ້ວ່າໂຄສະນາເຫຼົ່ານີ້ເປັນໂຄສະນາທີ່ກຳນົດກຸ່ມເປົ້າໝາຍຫຼືບໍ່.

ທັງນີ້, ປະເທດນອກອີຢູຈະບໍ່ສາມາດຈ່າຍຄ່າໂຄສະນາທາງການເມືອງໃຫ້ກັບສະມາຊິກສະຫະພາບ ໃນໄລຍະສາມເດືອນກ່ອນການເລືອກຕັ້ງ ຫຼື ການລົງປະຊາມະຕິ; ກົດໝາຍໃໝ່ນີ້ ຍັງຫ້າມການນຳໃຊ້ຂໍ້ມູນສ່ວນຕົວເຊັ່ນ: ເຊື້ອຊາດ, ສາສະໜາ ຫຼື ຄວາມມັກທາງເພດ ລວມທັງຂໍ້ມູນຂອງເຍົາວະຊົນ ເພື່ອການໂຄສະນາທາງການເມືອງເຊັ່ນດຽວກັນ.

ເຖິງແມ່ນວ່າກົດໝາຍດັ່ງກ່າວຈະມີຜົນສັກສິດພາຍໃນ 18 ເດືອນ ຫຼັງຈາກ ອີພີ ແລະ ບັນດາປະເທດສະມາຊິກຂອງ ອີຢູ ປະກາດໃຊ້ຢ່າງເປັນທາງການ, ແຕ່ບາງອົງປະກອບຈະມີຜົນບັງຄັບໃຊ້ໃນໄລຍະການເລືອກຕັ້ງລັດຖະສະພາເອີຣົບ ເຊິ່ງຈະຈັດຂຶ້ນລະຫວ່າງວັນທີ 06-09 ມິຖຸນາ 2024.



# ລັດຖະບານມຽນມາ ເລີ່ມສຳຫຼວດປະຊາກອນ ກະກຽມຈັດການເລືອກຕັ້ງແຫ່ງຊາດ



ເມື່ອຕົ້ນເດືອນກຸມພາຜ່ານມາ, ທ່ານ ພົອ. ອາວຸໂສ ມິນ ອອງ ໄຫຼ (Min Aung Hlaing) ນາຍົກລັດຖະມົນຕີມຽນມາ ໄດ້ຍົກຍ້າຍທ່ານ ໂກ ໂກ (Ko Ko) ລັດຖະມົນຕີກະຊວງກິດຈະການສາສະໜາ ແລະ ວັດທະນະທຳ ໄປເປັນປະທານຄະນະກຳມະການການເລືອກຕັ້ງຂອງລັດຖະບານ, ທ່ານ ໂກ ໂກ ໄດ້ພົບປະຫາລືກັບບັນດາສະມາຊິກຂອງພັກການເມືອງຕ່າງໆ ພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະເຮັດໃຫ້ການເລືອກຕັ້ງປະສົບຜົນສຳເລັດ.

ທ່ານ ມິນ ໄຈ (Myint Kyaing) ລັດຖະມົນຕີກະຊວງກວດຄົນເຂົ້າເມືອງ ແລະປະຊາກອນ ແລະ ພະນັກງານຈາກກະຊວງພາຍໃນ ໄດ້ພົບປະກັນໃນວັນພະຫັດທີ 15 ກຸມພາຜ່ານມາ ເພື່ອປຶກສາຫາລືກ່ຽວກັບການກະກຽມການເລືອກຕັ້ງ, ໂດຍສື່ມວນຊົນຂອງລັດຖະບານລະບຸວ່າ ທ່ານ ມິນ ໄຈ ໄດ້ລາຍງານກ່ຽວກັບຄວາມຄືບໜ້າຂອງການສຳຫຼວດສຳມະໂນປະຊາກອນ ທີ່ມີກຳນົດຈະໃຫ້ສຳເລັດພາຍໃນເດືອນຕຸລານີ້ ເຊິ່ງຮ່າງການສຳຫຼວດສະບັບທຳອິດ ໄດ້ຍື່ນໃຫ້ຄະນະກຳມະການການເລືອກຕັ້ງຂອງລັດຖະບານແລ້ວ.

ທ່ານ ພົອ. ອາວຸໂສ ມິນ ອອງ ໄຫຼ ກ່າວວ່າ: ຜົນຂອງການສຳຫຼວດສຳມະໂນປະຊາກອນ ຈະຖືກນຳໃຊ້ເພື່ອຮວບຮວມບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ແລະ ໄດ້ແຈ້ງໃຫ້ບັນດາຜູ້ນຳຂອງພັກການເມືອງຕ່າງໆຊາບໃນວັນທີ 13 ກຸມພາຜ່ານມາວ່າ ລັດຖະບານພວມກະກຽມການເລືອກຕັ້ງ.

ຜູ້ນຳລັດຖະບານ ບໍ່ໄດ້ກ່າວວ່າຈະມີການເລືອກຕັ້ງໃນເວລາໃດ, ແຕ່ມີສັນຍານຊີ້ໃຫ້ເຫັນວ່າ ອາດຈະເປັນປີ 2025 ພາຍຫຼັງບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຖືກສັງລວມແລ້ວ.

ເມື່ອປີຜ່ານມາ, ລັດຖະບານມຽນມາໄດ້ອອກກົດໝາຍວ່າດ້ວຍການຂຶ້ນທະບຽນພັກການເມືອງສະບັບໃໝ່ ທີ່ກຳນົດໃຫ້ທຸກພັກການເມືອງຂຶ້ນທະບຽນກັບໜ່ວຍງານການເລືອກຕັ້ງຂອງລັດຄືນໃໝ່, ຖ້າບໍ່ດັ່ງນັ້ນ ຈະຖືກຍຸບພັກ.

ລັດຖະບານໄດ້ເຊີນຜູ້ປະກອບການເຂົ້າຮ່ວມປະມູນສົມທຽບລາຄາຈັດຊື້ອຸປະກອນການເລືອກຕັ້ງ; ນອກຈາກນັ້ນ, ຍັງສ້າງເຄື່ອງລົງຄະແນນສຽງເອເລັກໂຕຼນິກເຊິ່ງໜ່ວຍງານການເລືອກຕັ້ງໄດ້ສາທິດຕໍ່ຜູ້ມີສິດເລືອກຕັ້ງຢູ່ເມືອງຢາງກຸ້ງ, ມັນທາເລ (Mandalay), ເນປີດໍ (Naypyidaw) ແລະ ເອຢາວາດີ (Ayeyarwady).



# ສະພາແຫ່ງຊາດຮົງກາລີ ອະນຸມັດການເຂົ້າເປັນສະມາຊິກນາໂຕຂອງຊູແອດ

ວັນທີ 26 ກຸມພາ 2024, ສະມາຊິກສະພາແຫ່ງຊາດຮົງກາລີ 194 ທ່ານ (ໃນຈຳນວນທັງໝົດ 199 ທ່ານ) ທີ່ເຂົ້າຮ່ວມກອງປະຊຸມວັນທຳອິດ ໄດ້ມີມະຕິອະນຸມັດຮ່າງກົດໝາຍກ່ຽວກັບການຍື່ນສະເໜີຂໍເຂົ້າເປັນສະມາຊິກອົງການສົນທິສັນຍາອັດລັງຕິກເໜືອຫຼືນາໂຕ(NATO) ຂອງຊູແອດ ດ້ວຍການລົງຄະແນນສຽງເຫັນດີ 188 ສຽງ ແລະ ຄັດຄ້ານ 6 ສຽງ.



ດ້ວຍການໃຫ້ສັດຕະຍາບັນຄັ້ງນີ້, ຮົງກາລີ ກາຍເປັນປະເທດສຸດທ້າຍໃນຈຳນວນ 31 ປະເທດສະມາຊິກນາໂຕ ທີ່ໄດ້ອະນຸມັດການຍື່ນສະເໜີຂອງຊູແອດ ຂໍເຂົ້າເປັນສະມາຊິກພັນທະມິດທາງທະຫານແຫ່ງນີ້, ພາຍຫຼັງໄດ້ຮັບໄຟຂຽວຈາກສະພາແຫ່ງຊາດຕວັກກີ ໃນວັນທີ 23 ມັງກອນຜ່ານມາ; ຊູແອດ ຈະກາຍເປັນປະເທດສະມາຊິກລຳດັບທີ 32 ຢ່າງເປັນທາງການໃນກອງປະຊຸມສຸດຍອດຄັ້ງຕໍ່ໄປທີ່ນະຄອນຫຼວງວໍຊິງຕັນ ດີຊີ, ສະຫະລັດອາເມລິກາໃນເດືອນກໍລະກົດປີນີ້.

ຮ່າງກົດໝາຍດັ່ງກ່າວຍັງຕ້ອງໄດ້ຮັບການລົງນາມໂດຍທ່ານທາມາດຊູຍອກ(Tamas Sulyok)ປະທານາທິບໍດີຮົງກາລີຄົນໃໝ່ ທີ່ຫາກໍໄດ້ຮັບການເລືອກຕັ້ງຈາກສະພາແຫ່ງຊາດໃນວັນດຽວກັນ ເພື່ອກາຍເປັນກົດໝາຍ.

**ແຫຼ່ງຂ່າວ: ຊິນຮວາ**





## ສຸກສະບາຍທາຍໂລດ

# 3 ສະໝຸນໄພ ຊ່ວຍຮັກສາ ບາດແຜໃນກະເພາະອາຫານ

ໂດຍ: ທິວກະທິ



**ຂີ້ມີ້ນ:** ນຳເອົາເຫງົ້າແກ່ ແລະ ສົດ ມາລ້າງໃຫ້ສະອາດຊອຍເປັນຕ່ອນບາງໆ ໂດຍບໍ່ຕ້ອງປອກເປືອກຈາກນັ້ນຕາກແດດປະມານ 1-2 ມື້ ແລ້ວນຳມາບົດໃຫ້ລະອຽດປະສົມກັບນ້ຳເຜີ້ງປັ້ນເປັນລູກກອນ ຫຼື ບັນຈຸແຄບຊູນ ເກັບໄວ້ໃນກ່ອງສະອາດ ຮັບປະທານເທື່ອລະ 500 ມິນລິກຣາມ ມື້ລະ 4 ເທື່ອ ຫຼັງອາຫານ ແລະ ກ່ອນນອນ.

**ໝາກກ້ວຍນ້ຳ:** ນຳໝາກກ້ວຍນ້ຳດິບຝານເປັນປ່ຽງຕາກແດດປະມານ 2 ມື້ ຫຼືອົບໃຫ້ແຫ້ງໃນອຸນຫະພູມ 50 ອົງສາເຊ ແລະ ບົດເປັນຜົງວິທີຮັບປະທານໃຫ້ນຳຜົງກ້ວຍດິບເທື່ອລະເຄິ່ງຫາໜຶ່ງໜ່ວຍ ຊົງກັບນ້ຳ ຫຼື ປະສົມກັບນ້ຳເຜີ້ງ 1 ບ່ວງແກງດື່ມ ຫຼື ນຳຜົງກ້ວຍດິບມາປັ້ນເປັນລູກກອນຮັບປະທານເທື່ອລະ 4 ເມັດ ມື້ລະ 4 ເທື່ອ ກ່ອນອາຫານ ແລະ ກ່ອນນອນ.

**ຫວ້ານຫາງແຂ້:** ໃຊ້ໃບສົດທີ່ຫາກໍຕັດອອກຈາກຕົ້ນ ນຳມາລ້າງໃຫ້ສະອາດ ປອກເປືອກເອົາສ່ວນທີ່ມີສີຂຽວອອກໃຫ້ເຫຼືອແຕ່ວຸ້ນໃສໆ ຫາກມີຢາງສີເຫຼືອງຕິດຢູ່ວຸ້ນໃຫ້ລ້າງອອກກ່ອນ ແລ້ວຈຶ່ງຊອຍວຸ້ນເປັນຕ່ອນນ້ອຍໆ ແລ້ວລ້າງໃຫ້ສະອາດອີກເທື່ອໜຶ່ງ ຮັບປະທານມື້ລະ 2 ເວລາ ຄື: ກ່ອນອາຫານເຊົ້າ ແລະ ແລງ.

**ຂໍ້ມູນຈາກ:**
**www.kidork.com**



## ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

\# ສາວຈົ້ມ

*ຈົ່ມເຊີຍ! ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ **69 ປີ (22 ມີນາ 1955 - 22 ມີນາ 2024)** ໂອກາດນີ້ ຂໍໃຫ້ພັກຜູ້ກ້າ ປະຊາພໍ່າສຸກສັນ ສຸກກະເສມສຳລານ ທົ່ວທາບົນແຄວ້ນ ທຸກແຫ່ງແດນທໍ່ທ້ອງ ເມືອງລາວເຈົ້ງຊ່າ ຂໍໃຫ້**ພັກ-ລັດ**ປອງປະຊາພໍ່າພ້ອມ **ມີອາຍຸ-ວັນນະ-ສຸຂະພາບພຽບພ້ອມ** ຢືນຄຽງຂ້າງຄູ່ຊາດລາວ **ທ່ານເອີຍ!***

*21 ມີນາ **ບັ້ນຮົບທ່າແຂກ** ເປັນມື້ທີ່ປະຊາຊົນລາວ ຜູ້ບໍລິສຸດຖືກສັງຫານປະມານສາມພັນຄົນ ແລະຜູ້ຖືກຂ້າ 1/5 ແມ່ນເດັກນ້ອຍທີ່ກຽມເຕີບໂຕ ແລະ ກາຍເປັນ**ໜໍ່ແໜງຂອງປະເທດຊາດ**ໃນອະນາຄົດ. ເປັນວັນລະນຶກເຖິງ**ນ້ຳໃຈເສຍສະຫຼະອັນສູງສົ່ງ**ຂອງປະຊາຊົນລາວ ກໍຄືການນຳສະໄໝກ່ອນ ເພື່ອປົກປ້ອງຜືນແຜ່ນດິນອັນແສນຮັກ ເຖິງແມ່ນ**ເຫຼົ່າຈະຫຼາຍກວ່າຖ່ານ** ແຕ່ຄວາມກ້າຫານເດັດດ່ຽວຕໍ່ສູ້ຍອມເສຍສະຫຼະແມ່ນແຕ່ຊີວິດເພາະ **"ຄວາມຮັກຊາດແຮງກວ່າຄວາມຕາຍ"** ຄົນສ່ວນຫລາຍຮັບຮູ້ ທອບກ່າວບຸນຄຸນ ຂໍໃຫ້ຄົນຮຸ່ນຫຼັງ ສືບສານຮັກສາໄວ້ ຈົນໃບດິນສິ້ນໃບນ້ຳ ການນຳໄດ້ຍາດແຍ່ງ ມານັ້ນ ຊ່ວຍກັນເສີມສືບສ້າງ ເມືອງບ້ານໃຫ້ຮຸ່ງເຮືອງ **ທ່ານເອີຍ!***

## ອາດ ກະວີລາວ

# ແມ່ຍິງຍຸກໃໝ່

\# ສໍ.ພູທອນ

❊ 8 ມີນາ ເບີກຟ້າ
ວັນສະຕີສາກົນ
ທຸກແຫ່ງຫົນທໍ່ທ້ອງ
ແມ່ຜູ້ແສນສະຫຼາດກ້າ

ນະພາຮຸ່ງເຮືອງຮອງ
ທົ່ວແດນຍໍຍ້ອງ
ສະຫຼອງໄຊເຫັນຄ່າ
ໂລກາຍ້ອງຊື່ນຊົມ

❊ ງາມສົມຄຳເອກອ້າງ
ສວມເຄື່ອງໄໝແພວາ
ລວດລາຍສີເຕີມແຕ້ມ
ປະກອບຍາມສິ່ງຍິ້ມ

ຫາຫຍັງເທົ່າທຽມທັນ
ບ່ຽງກາຍກວມເນື້ອ
ຊອນແຊມສານສອດ
ສະອອນເອ້ເດັ່ນງາມ

❊ ສຳນຽງຫວານອື່ນອ້ອຍ
ມົນສະເໜ່ຊວນຊົມ
ລະເມີນຳນວນນ້ອງ
ວັດທະນະທຳຊິດໃກ້

ອອຍອ່ອຍຫຼິ່ງໄຫຼ
ມັດຊວງຊາຍເຊື້
ສາວລາວຍຸກໃໝ່
ມີໄລລ້ຳລ່ວງເລີຍ

❊ ຮີດຄອງເຄີຍເກົ່າກີ້
ສິ້ນໄໝຜືນລາຍງາມ
ສາວລາວຜິວພັນກ້ຽງ
ງາມເລີດຍິ່ງທົ່ວຫຼ້າ

ປະເພນີຄູ່ຄຽງກາຍ
ຫົ່ມກາຍຜົມເກົ້າ
ມະໂນໃນໃສປະເສີດ
ນະພາກວ້າງເດັ່ນດັງ

❊ ນັກຮຽນເຫັນຮ່ອມຮູ້
ມະຫາໄລສາວສວຍ
ພະນັກງານອົງການພ້ອມ
ສິ້ນລາວເຜີຍເອກອ້າງ

ມາແຕ່ອານຸບານ ຍ້ອນແມ່
ໃສ່ສວມເສີມສິ້ນ
ດູດີເປັນລະບຽບ
ສາກົນຮູ້ທົ່ວເຖິງ

❊ ຂໍຊົມເຊີຍຍົກຍ້ອງ
ບໍ່ໄດ້ໄລລາໜີ
ສິ້ນໄໝລາວກໍເຫງົ້າ
ພ້ອມສະຫງວນສືບໄວ້

ຍິງລາວໃໝ່ຄິງສະໄໝ
ປ່ອຍປະເພນີປື້ນ
ປາງປະຖົມມູນມັງແມ່
ໝາຍໝັ້ນຄູ່ລາວ ຊອບແລ້ວ!




## ຊວນຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ຂອງຂວັນວັນເກີດ

ເມື່ອໃກ້ຈະເຖິງວັນເກີດ ເສດຖີໄດ້ປະກາດໃຫ້ລູກນ້ອງຂອງຕົນ ຫ້າມບໍ່ໃຫ້ເອົາຂອງຂວັນມາໃຫ້ຕົນ ເພາະຕົນມີທຸກຢ່າງແລ້ວ.

ມື້ວັນເກີດ, ບັງເອີນມີລູກນ້ອງຄົນໜຶ່ງເອົາຂອງຂວັນມາໃຫ້ພໍແຕ່ຫຼຽວເຫັນ ເສດຖີກໍໃນໃຫ ແລະ ສັ່ງຈັບໂຕ ແລ້ວເອົາໄປມັດໄວ້ພ້ອມທັງເອົາໝາກກ້ວຍດິບທີ່ນຳມາເປັນຂອງຂວັນຍັດກົ້ນລູກນ້ອງຄົນດັ່ງກ່າວ ໜ່ວຍທີ 1 ກໍຮ້ອງອອກມາດ້ວຍຄວາມເຈັບປວດ ໜ່ວຍທີສອງບໍ່ມີສຽງຫຍັງ, ໜ່ວຍທີສາມ ເລີ່ມມີຮອຍຍິ້ມ ແລະ ໜ່ວຍທີສີ່ ພັດມີສຽງຫົວ ໜ່ວຍທີຫ້າ,ຫົກ,ເຈັດ,ແປດ ຍິ່ງຫົວແຮງຂຶ້ນເລື້ອຍໆເສດຖີຄາໃຈເລີຍຖາມວ່າ:

**ເສດຖີ:** ມຶງຫົວຫຍັງ ມຶງບໍ່ເຈັບບໍ່ ເອົາກ້ວຍຍັດກົ້ນປານນີ້

**ລູກນ້ອງ:** ເຈັບ!!!!!

**ເສດຖີ:** ແລ້ວມຶງຫົວເຮັດຫຍັງ?

**ລູກນ້ອງ:** ຂ້ອຍຄິດເຫັນໝູ່ອີກຄົນໜຶ່ງກຳລັງຈະເອົາຖົ່ວລຽນມາເປັນຂອງຂວັນໃຫ້ທ່ານ

**ເສດຖີ:** !!!!!!!!!!

## ຄະຕິເຕືອນໃຈ

\# ດອກຫຍ້າ

ວັນວ່າຜົວເມຍຮ້າຍ ຍາມດຽວກໍເປັນເພີ່ນໄດ່ເບີ
ບາດວ່າພີ່ນ້ອງຮ້າຍ ຄືຊິບໍ່ເໝັນ

ເຝົ້າໄວ້ ໄດ້ບົດຮຽນ

# ບັນຫາການຕົ້ມຕຸ໋ນໃນວົງການ ການຄ້າ ແລະ ເລື່ອງການສໍ້ລາດບັງຫຼວງ

❖ ວິເສດ ສະແຫວງສຶກສາ

ເລື່ອງສັນທານາເລົ່າປະຈຳ "ຜູ້ແທນປະຊາຊົນ" ສະບັບນີ້ພົວພັນກັບການຕົ້ມຕຸ໋ນໃນວົງການການຄ້າທີ່ເກີດຂຶ້ນຢູ່ຫວຽດນາມ ແລະ ເລື່ອງອັດຕາການສໍ້ລາດບັງຫຼວງທີ່ມີຈຳນວນໜ້ອຍທີ່ສຸດຢູ່ບາງປະເທດ ຕາມແຫຼ່ງຂ່າວຕ່າງປະເທດດັ່ງລຸ່ມນີ້.

ການຕົ້ມຕຸ໋ນໃນວົງການການຄ້າຫວ່າງບໍ່ດົນມານີ້, ທາງການກ່ຽວຂ້ອງຂອງຫວຽດນາມ ໄດ້ອອກຄຳເຕືອນບັນດາຜູ້ປະກອບການທາງທຸລະກິດວ່າ ໃຫ້ລະວັງຂະບວນການຕົ້ມຕຸ໋ນທີ່ພະຍາຍາມແຊກຫຼິ້ມເຂົ້າໃນວົງການຄ້າລະດັບພາກພື້ນ ແລະ ສາກົນ. ເຫຼົ່ານັກຕົ້ມຕຸ໋ນທີ່ວ່ານີ້ ໃຫ້ຄວາມສົນໃຈເປັນພິເສດໃນຂະແໜງທຸລະກິດ ຂາອອກ ແລະ ຂາເຂົ້າ ເພາະມີຂັ້ນຕອນສະຫຼັບຊັບຊ້ອນກ່ຽວກັບການປະກອບເອກະສານ ກໍຄືການຕິດຕໍ່ພົວພັນດ້ວຍເຄື່ອງມືສື່ສານ. ພວກຫຼອກລວງຕົວະຕົ້ມທີ່ວ່ານີ້ ມີຄວາມແນບນຽນແລະຄວາມຊຳນານໃນການນຳໃຊ້ເຄື່ອງມືສື່ທີ່ທັນສະໄໝເພື່ອຈຸດປະສົງຂອງພວກເຂົາເຈົ້າ. ຍ້ອນແນວນີ້ເອງ, ບັນດາປະເທດທີ່ນຳເຂົ້າ ແລະ ສົ່ງອອກສິນຄ້າ ຈຶ່ງໄດ້ອອກມາດຕະການທີ່ເຄັ່ງຄັດຮັດກຸມ ເພື່ອຄວບຄຸມທຸລະກິດໃນຂະແໜງນີ້ໃຫ້ປອດໄພຈາກການຖືກຫຼອກລວງ. ຂ່າວໄດ້ຍົກຕົວຢ່າງກໍລະນີນັກຕົ້ມຕຸ໋ນ ໄດ້ພະຍາຍາມສໍ້ໂກງທຸລະກິດສົ່ງອອກສິນຄ້າກະສິກຳຂອງຫວຽດນາມ ໄປ ສປຈີນ ຫວ່າງບໍ່ດົນມານີ້ ໂດຍນັກຕົ້ມຕຸ໋ນ ໄດ້ສ້າງເອກະສານປອມ ໃນນາມລູກຄ້າຝ່າຍຈີນ ທີ່ຮຽກຮ້ອງໃຫ້ຝ່າຍຫວຽດນາມ ມີໃບຢັ້ງຢືນສິນຄ້າ ຈາກສຳນັກງານພາສີຈີນ ແລະ ໃຫ້ຝ່າຍສົ່ງອອກຂອງຫວຽດນາມ ຈ່າຍຄ່າເອກະສານຢັ້ງຢືນດັ່ງກ່າວຜ່ານເວັບໄຊ. ຄ່າເອກະສານທີ່ວ່ານັ້ນ ມີມູນຄ່າແຕ່ 100-1.000 ໂດລາສະຫະລັດ. ແຕ່ໂຊກດີທີ່ທາງການກ່ຽວຂ້ອງຂອງຫວຽດນາມ ໄດ້ຕິດຕາມເລື່ອງນີ້ໄດ້ຢ່າງທັນການວ່າ ເປັນກົນລວງຂອງນັກຕົ້ມຕຸ໋ນ. ຈຸດທີ່ເປັນພິລຸດຂອງກົນລວງດັ່ງກ່າວ ກໍຄືການສະກົດອັກສອນຫຍໍ້ຂອງໜ່ວຍງານອອກເອກະສານນັ້ນ ບໍ່ກົງກັບຂອງຈິງ ແລະ ກໍບໍ່ເຄີຍມີຄຳຮຽກຮ້ອງຂອງຝ່າຍຈີນໃຫ້ຜູ້ປະກອບການຂອງຫວຽດນາມມີເອກະສານດັ່ງກ່າວ. ຕໍ່ເຫດການດັ່ງກ່າວ, ທາງການຫວຽດນາມຈຶ່ງໄດ້ອອກມາເຕືອນບັນດານັກທຸລະກິດ ໂດຍສະເພາະແມ່ນໃນຂະແໜງທຸລະກິດຂະໜາດກາງ ແລະຂະໜາດນ້ອຍ ທີ່ສົ່ງອອກສິນຄ້າ. ກຸ່ມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍນີ້ສ່ວນຫຼາຍຍັງຂາດບົດຮຽນກ່ຽວກັບວຽກເອກະສານ ແລະ ຍັງຂາດປະສົບການລະວັງໄພຈາກການຕົ້ມຕຸ໋ນທາງອອນລາຍ. ດັ່ງນັ້ນ, ຈຶ່ງມີທ່າອ່ຽງຖືກຫຼອກລວງສໍ້ໂກງໄດ້ງ່າຍ. ຕົວເລກສຳຫຼວດຂອງຫວຽດນາມ ຊີ້ອອກວ່າ 52% ຂອງຫົວໜ່ວຍທຸລະກິດຫວຽດນາມ ແຈ້ງວ່າເຄີຍຖືກຫຼອກລວງໃນເວລາເຂົ້າຮ່ວມງານການຄ້າສາກົນ ປະຈຳປີ 2022. ຕົວເລກນີ້ສູງກວ່າ 46% ເຊິ່ງເປັນຕົວເລກສະເລ່ຍໃນພາກພື້ນອາຊີປາຊີຟິກ ແລະ 49% ຕົວເລກສະເລ່ຍລະດັບໂລກ.

ປະເທດທີ່ມີການສໍ້ລາດບັງຫຼວງໜ້ອຍທີ່ສຸດ ອົງການຄວາມໂປ່ງໃສ ແລະ ຕ້ານການສໍ້ລາດບັງຫຼວງໂລກ ໄດ້ຈັດປະເທດສິງກະໂປຢູ່ໃນອັນດັບທີ 5 ທີ່ມີການສໍ້ລາດບັງຫຼວງໜ້ອຍທີ່ສຸດໃນໂລກ ໂດຍໄດ້ຮັບຄະແນນ 83/100. ຕົວເລກນີ້ໄດ້ມາຈາກການສຳຫຼວດໃນທົ່ວໂລກປະຈຳປີ 2023. ການໃຫ້ຄະແນນປະຕິບັດກັນດັ່ງນີ້: ຄະແນນ 0/100 ແມ່ນປະເທດທີ່ບັນຫາສໍ້ລາດບັງຫຼວງເປັນອັນດັບທີ 1, ຄະແນນ 100/100 ແມ່ນສຳລັບປະເທດທີ່ບໍ່ມີການສໍ້ລາດບັງຫຼວງເລີຍ. ແຕ່ຄະແນນ 100/100 ນີ້ບໍ່ມີປະເທດໃດໄດ້ເລີຍນັບແຕ່ມີການສຳຫຼວດເປັນຕົ້ນມາ. ປະເທດທີ່ມີບັນຫາສໍ້ລາດບັງຫຼວງໜ້ອຍທີ່ສຸດໃນປີ 2023 ແມ່ນປະເທດດານມາກເຊິ່ງມີຄະແນນສູງສຸດ 90/100. ສຳລັບໃນທະວີບເອີຣົບ, ປະເທດທີ່ມີການສໍ້ລາດບັງຫຼວງໜ້ອຍໄດ້ແກ່ສະວີເດັນ (ຊູແອດ), ໂຮນລັງ, ອິດສະລັງ ແລະ ອັງກິດ. ແຕ່ເມື່ອສົມທຽບໃສ່ປີກ່ອນໆ, ຄະແນນທີ່ໄດ້ຮັບໃນປີ 2023 ນັ້ນຫຼຸດລົງຫຼາຍ ໂດຍສະເພາະແມ່ນອັງກິດນັ້ນໄດ້ຫຼຸດເກົ່າ 7 ຄະແນນ. ໃນຂົງເຂດອາຊີປາຊີຟິກນັ້ນ 4 ປະເທດ ແລະເຂດແຄວ້ນທີ່ມີການສໍ້ລາດບັງຫຼວງໜ້ອຍໄດ້ແກ່ ນູແວນເຊລັງ, ສິງກະໂປ, ອົດສະຕຣາລີ, ຍີ່ປຸ່ນ ແລະ ຮົງກົງ, ເຂດປົກຄອງພິເສດຂອງ ສປຈີນ.

ການແກ້ໄຂໃຫ້ປະເທດມີການສໍ້ລາດບັງຫຼວງຫຼຸດລົງໜ້ອຍເທົ່າໃດກໍຍິ່ງສາມາດດຶງດູດນັກລົງທຶນ-ນັກທ່ອງທ່ຽວຕ່າງປະເທດ ໄດ້ເພີ່ມຂຶ້ນ ເພາະພວກເຂົາຈະມີຄວາມໝັ້ນໃຈວ່າຈະບໍ່ຖືກໂກງ ຫຼື ຖືກຍັກຍອກເງິນ. ຂ່າວບອກວ່າຢູ່ປະເທດທີ່ມີການສໍ້ລາດບັງຫຼວງສູງນັ້ນ ວຽກງານມັກຈະບໍ່ມີປະສິດທິພາບສູງ, ເພາະຄົນມີແຕ່ຕ້ອງການຊອກລາຍຮັບກ້ອງໂຕະ ເພື່ອເຂົ້າຖົງຕົນເອງເທົ່ານັ້ນ.

ທະນາຄານພັດທະນາລາວ
LDB Bank



ຮຽນພາສາ ຜ່ານສຽງຫົວ

## ອະນາຄົດຂອງພວກລູກໆ

*# ບ່າວກະບື*

ໃນບໍລິເວນຫ້ອງເກີດລູກທີ່ໂຮງພະຍາບານ, ຊາຍສອງຄົນຊຶ່ງຈະກາຍເປັນພໍ່ເປັນເທື່ອທຳອິດໃນຊີວິດ ພວມສົນທະນາກັນຢ່າງເມົາມັນ.

ຜູ້ທີໜຶ່ງ: " ຖ້າລູກເຮົາເປັນຍິງ ມັນຈະຕ້ອງເປັນຄູສອນ ".

ຜູ້ທີສອງ: " ຖ້າເຮົາໄດ້ລູກສາວ ມັນຈະຕ້ອງເປັນຫົວໜ້າໂຮງຮຽນ ".

ຜູ້ທີໜຶ່ງ: " ເອີ່... ຖ້າວ່າມັນເປັນຊາຍເດ ຊິໃຫ້ມັນເປັນຫຍັງ ? ".

ຜູ້ທີສອງ: " ຫາກເປັນແນວນັ້ນ ມັນກໍຈະເປັນນັກເຕະບານທີ່ມີຊື່ສຽງ ".

ພໍໄດ້ຍິນແນວນັ້ນ, ຊາຍຜູ້ທີໜຶ່ງຫົວກາກລິ້ນ ທັງເວົ້າວ່າ: "ຖ້າລູກເຮົາເປັນຜູ້ຊາຍ ມັນຈະເປັນກຳມະການຕັດສິນຜູ້ຍິ່ງໃຫຍ່ຂອງສະຫະພັນບານເຕະໂລກ 'ຟີຟາ' ພຸ້ນແລ້ວ !".

## THE FUTURE OF CHILDREN

***# BAOKBU***

In the waiting room of the obstetrical hospital, two men who were going to be the fathers for the first time were engaged in a conversation.

First man: "If my child is a girl, she will become a teacher".

Second man: "If my child is a girl, she will become a headmistress".

First man: "But if your child is a what will he become?"

Second man: "Then he will become a famous football player".

Hearing that, the first man laughed and said: "If my child is a boy, he will become a great FIFA referee!"

ຕາມພາສາ ກາຕູນ



ຄວາມຈົງຮັກພັກດີ ທີ່ເຫຼືອ ແຕ່ຜ້າຫົ່ມ

● ໂດຍ : ພູຜາ

ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED

# ພາບການເຄື່ອນໄຫວຂອງຄະນະເລຂາທິການສະພາແຫ່ງຊາດລາວ ແລະ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ພົບປະແລກປ່ຽນບົດຮຽນ



























**ຜູ້ຊີ້ນໍາ**
ທ່ານ ສີງຄໍາ ວົງພະຈັນ

**ຄະນະຊີ້ນໍາວຽງຈັນທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອໍາພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ